# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ມັງກອນ 2026

ປີທີ 15

ສະບັບທີ 1050

ລາຍສັບປະດາ


## ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງໄຊພູທອງ



(ສພຊ) - ວັນທີ 14 ມັງກອນທີ່ຜ່ານມາ, ທ່ານປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ປະກອບມີທ່ານ ຄຳຜັນ ຄູນສະຫວັນ ຮອງປະທານສະພາປະຊາຊົນແຂວງ ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງໄຊພູທອງ ໄດ້ລົງເຜີຍແຜ່

ອ່ານຕໍ່ໜ້າ 4



### ແນວຄິດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ປະຊາທິປະໄຕນັ້ນ ບໍ່ພຽງແຕ່ປະຊາຊົນມີສິດເລືອກເອົາຕົວແທນຂອງຕົນເຂົ້າໃນບັນດາອົງການລັດ ແຕ່ຫາກຍັງມີຄວາມໝາຍວ່າຕ້ອງເຮັດແນວໃດ ເພື່ອໃຫ້ແຜນນະໂຍບາຍ ແລະນະໂຍບາຍຂອງພັກ ແລະ ລັດ ລ້ວນແຕ່ເລີ່ມຈາກຄວາມຮຽກຮ້ອງຕ້ອງການ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນຜູ້ອອກແຮງງານ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 187-188)

ພັກເຮົາໄດ້ກຳນົດວ່າ ພະນັກງານຈະແມ່ນຢູ່ຂັ້ນໃດກໍຕາມ ຕ້ອງແບ່ງ 1/3 ເຖິງ 2/3 ຂອງເວລາເຮັດວຽກ ເພື່ອລົງໄປຮາກຖານ, ໄປສີ່ສຳພັນກັບມະຫາຊົນ, ໄປໂອ້ລົມສົນທະນາກັບມະຫາຊົນ, ສົນໃຈຟັງຄວາມຄິດເຫັນຂອງຂັ້ນລຸ່ມ ແລະ ຂອງມະຫາຊົນ ເພື່ອແກ້ໄຂບັນຫາຕ່າງໆ ທີ່ເຂົາເຈົ້າສະເໜີອອກມານັ້ນ ໄດ້ຢ່າງທັນການ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 179)

ອ່ານຕໍ່ສະບັບໜ້າ

## ຕິດຕາມ, ຊຸກຍູ້ ການກະກຽມເລືອກຕັ້ງຢູ່ນະຄອນຫຼວງ ແລະ ແຂວງວຽງຈັນ

(ສພຊ)-ເພື່ອຕິດຕາມ, ຊຸກຍູ້ ການກະກຽມວຽກງານດ້ານຕ່າງໆ ໃນການຮັບໃຊ້ໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີ V ໃຫ້ສຳເລັດຕາມແຜນການທີ່ກຳນົດ ທັງເກັບກຳຄຳສະເໜີ, ຂໍ້ສະ

ອ່ານຕໍ່ໜ້າ 5



## ຄລຊ ຊຸກຍູ້ວຽກງານກະກຽມການເລືອກຕັ້ງ ຢູ່ເຊກອງ ແລະ ສາລະວັນ



(ສພຊ) - ວັນທີ 19 ມັງກອນ 2026, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ), ຫົວໜ້າອະນຸກຳມະການບໍລິຫານ, ພິທີການ ແລະ ງົບປະມານ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມ ແລະ ຊຸກ

ອ່ານຕໍ່ໜ້າ 8




## ຜົນສຳເລັດກອງປະຊຸມວິສາມັນຂອງຄະນະປະຈຳສະພາແຫ່ງຊາດ



(ສພຊ) - ຕອນແລງວັນທີ 19 ມັງກອນຜ່ານມາ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ, ຫົວໜ້າຫ້ອງວ່າການສະພາແຫ່ງ

ອ່ານຕໍ່ໜ້າ 4

## ຊຸກຍູ້ວຽກງານເລືອກຕັ້ງ ສສຊ ແລະ ສສຂ ຢູ່ 2 ແຂວງພາກໃຕ້




(ສພຊ)-ວັນທີ 19-21 ມັງກອນຜ່ານມາ, ທ່ານ ສັນຕິພາບ ພົມວິຫານ ກຳມະການສູນກາງພັກ, ລັດຖະມົນຕີກະຊວງການເງິນ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ), ຮອງຫົວໜ້າອະນຸກຳ

ອ່ານຕໍ່ໜ້າ 5

## ສສຊ -ສສຂ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງປາກຊັນ



ອ່ານຕໍ່ໜ້າ 12




ອາຫານ... (ໜ້າ 9)



ສະພາແຫ່ງຊາດ... (ໜ້າ 11)




ຜູກຈິດ... (ໜ້າ 12)

## ຊົມເຊີຍວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 77 ປີ (20/01/1949-20/01/2026) ຢ່າງສຸດໃຈ!

# ຕິດຕາມ, ຊຸກຍູ້ ການກະກຽມເລືອກຕັ້ງຢູ່ບໍລິຄຳໄຊ



(ສພຊ)-ເພື່ອຕິດຕາມ, ຊຸກຍູ້ ການກະກຽມວຽກງານດ້ານຕ່າງໆ ໃນການຮັບໃຊ້ໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ໃຫ້ສຳເລັດຕາມແຜນການທີ່ກຳນົດ ທັງເກັບກຳຄຳສະເໜີ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດມະຕິ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການຂອງຂັ້ນເທິງ ເພື່ອລາຍງານຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ); ວັນທີ 19-22 ມັງກອນນີ້, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ກຳມະການອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມ, ຊຸກຍູ້ການເລືອກຕັ້ງ ສສຊ ປະຈຳເຂດເລືອກຕັ້ງທີ 11 ຊຸດທີ X ແລະ ສສຂ ຊຸດທີ V ຢູ່ແຂວງບໍລິຄຳໄຊ ໂດຍການຕ້ອນຮັບ ແລະ ຮ່ວມເຮັດວຽກຂອງທ່ານ ປອ. ສອນທະນູ ທຳມະວົງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ (ຄລຂ), ບັນດາທ່ານໃນຄະນະກຳມະການເລືອກຕັ້ງຂັ້ນເມືອງ(ຄລມ)ຈາກ 6 ເມືອງ: ປາກຊັນ, ທ່າພະບາດ, ປາກກະດິງ, ວຽງທອງ, ຄຳເກີດ ແລະ ໄຊຈຳພອນ ພ້ອມດ້ວຍອະນຸກຳມະການ ແລະ ກອງເລຂາຊ່ວຍວຽກຂອງ ຄລຂ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ປອ. ສອນທະນູ ທຳມະວົງ ໄດ້ລາຍງານການກະກຽມວຽກງານຢ່າງຮອບດ້ານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ; ນອກນີ້, ກໍໄດ້ຮັບຟັງການລາຍງານຂອງບັນດາອະນຸກຳມະການຂອງ ຄລຂ ແລະ ການລາຍງານຂອງບັນດາທ່ານປະທານຄະນະກຳມະການເລືອກຕັ້ງຂັ້ນເມືອງ ກ່ຽວກັບການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການເລືອກຕັ້ງຄັ້ງນີ້ທີ່ຈະຈັດຂຶ້ນໃນວັນທີ 22 ກຸມພາທີ່ຈະມາເຖິງ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມ ໄດ້ປະກອບຄຳເຫັນ ເພື່ອປຶກສາຫາລືແລກປ່ຽນເຖິງບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກແລະແຜນການທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ ເພື່ອກະກຽມຄວາມພ້ອມໃນດ້ານຕ່າງໆ ຮັບປະກັນເຮັດໃຫ້ບັ້ນເລືອກຕັ້ງໄດ້ຮັບການຈັດຕັ້ງປະຕິບັດບັນລຸຜົນຕາມລະດັບຄາດໝາຍ ພ້ອມທັງຮັບປະກັນ4ຄາດໝາຍໃຫຍ່ຄື: ຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງໄປໃຊ້ສິດຄົບຖ້ວນ100%,ຮັບປະກັນການໃຊ້ສິດມີຄວາມຖືກຕ້ອງ100%,ຮັບປະກັນຄວາມສະຫງົບຄວາມປອດໄພ100% ແລະ ຮັບປະກັນຄວາມໂປ່ງໃສ 100%.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນເນັ້ນໜັກໃຫ້ເອົາໃຈໃສ່ການຄົ້ນຄວ້າ,ຄັດເລືອກເອົາຜູ້ສະໝັກຮັບເລືອກຕັ້ງຕາມທີ່ກຳນົດໃນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍສົມທົບກັບທຸກພາກສ່ວນກ່ຽວຂ້ອງ ເພື່ອໃຫ້ຮັບປະກັນໂຄງປະກອບດ້ານເພດ, ເຜົ່າ, ຮຸ່ນໜຸ່ມ, ຮຸ່ນກາງ, ຮຸ່ນອາວຸໂສ ໃນອັດຕາສ່ວນທີ່ເໝາະສົມ, ໃຫ້ມີເພດຍິງອອກສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ສະເລ່ຍລວມຢ່າງໜ້ອຍບໍ່ໃຫ້ຫຼຸດ 35% ຂອງຈຳນວນຜູ້ສະໝັກຮັບເລືອກຕັ້ງທັງໝົດໃນເຂດເລືອກຕັ້ງຂອງຕົນ ແລະ ຮັບປະກັນເລືອກຕັ້ງໃຫ້ໄດ້ຜູ້ແທນທີ່ເປັນເພດຍິງສະເລ່ຍບໍ່ໃຫ້ຫຼຸດ 30% ຂອງຈຳນວນ ສສຊ ແລະ ສສຂ; ໃຫ້ຄະນະກຳມະການເລືອກຕັ້ງແຂວງບໍລິຄຳໄຊກໍຄືຂັ້ນເມືອງເອົາໃຈໃສ່ຈັດຕັ້ງເຊື່ອມຊຶມແລະຜັນຂະຫຍາຍຄຳແນະນຳສະບັບເລກທີ 16/ຄລຊ, ລົງວັນທີ 12 ມັງກອນ 2026ກ່ຽວກັບການຈັດຕັ້ງການໂຄສະນາຫາສຽງ ແລະ ການຕິດຮູບ-ປະຫວັດຫຍໍ້ຂອງຜູ້ສະໝັກຮັບເລືອກຕັ້ງ; ເອົາໃຈໃສ່ວຽກງານສຶກສາອົບຮົມປະຊາຊົນບັນດາເຜົ່າ ໃຫ້ຕື່ນຕົວເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີການປະສານງານຢ່າງກົມກຽວ, ມີມາດຕະການທີ່ສອດຄ່ອງ ເພື່ອແກ້ໄຂບັນດາປາກົດການຫຍໍ້ທໍ້ຕ່າງໆທີ່ອາດຈະເກີດຂຶ້ນໃຫ້ທັນການ ແລະ ເດັດຂາດ; ສືບຕໍ່ຂຶ້ນບັນຊີຈຳນວນໜ່ວຍປ່ອນບັດເລືອກຕັ້ງ, ເກັບກຳຈຳນວນຫີບບັດ, ພິມຮູບ ແລະ ຊີວະປະຫວັດຜູ້ສະໝັກຮັບເລືອກຕັ້ງເປັນ ສສຂ, ການພິມບັດລົງຄະແນນສຽງ, ກວດກາຕາປະທັບ ແລະ ອື່ນໆ ແລ້ວສົ່ງໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ.

ໃນວັນທີ 20 ມັງກອນ, ຄະນະຈາກສູນກາງ ແລະ ຄະນະກຳມະການເລືອກຕັ້ງແຂວງບໍລິຄຳໄຊ ໄດ້ລົງຕິດຕາມ, ຊຸກຍູ້ວຽກງານການເລືອກຕັ້ງຢູ່ຂັ້ນເມືອງເພື່ອຮັບຟັງລາຍງານການກະກຽມ ແລະ ດຳເນີນການເລືອກຕັ້ງ ຈາກ ຄລມ ເຊິ່ງໄດ້ແບ່ງອອກເປັນ 2 ຄະນະຄື: ທ່ານ ບຸນຕາ ເທບພະວົງ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ, ກຳມະການອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ລົງຕິດຕາມ, ຊຸກຍູ້ ຢູ່ເມືອງວຽງທອງ; ທ່ານ ສິງຄຳ ວົງພະຈັນ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ກຳມະການອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ລົງຕິດຕາມ, ຊຸກຍູ້ຢູ່ເມືອງຄຳເກີດ.

**(ນາງ ອານິຕາ ມ່ວນສະຫວັດ)**



# ຄລຊ ຕິດຕາມ, ວຽກງານເລືອກຕັ້ງຢູ່ແຂວງຫຼວງນ້ຳທາ ແລະ ແຂວງບໍ່ແກ້ວ




(ສພຊ) - ວັນທີ 19 ມັງກອນຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມ ຕິດຕາມ, ຊຸກຍູ້ການກະກຽມແລະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ V ໂດຍການເປັນປະທານຮ່ວມຂອງທ່ານ ເລັດ ໄຊຍະພອນ ປະທານສູນກາງສະຫະພັນກຳມະບານລາວ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ ຄລຊ), ກຳມະການອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ແລະ ທ່ານ ພົຕ. ປອ. ວົງສັກ ພັນທະວົງ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກຳມະການອະນຸກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງ ຄລຊ, ມີທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງແຂວງ (ຄລຂ) ຫຼວງນ້ຳທາ, ບັນດາທ່ານຄະນະກຳມະການແລະອະນຸກຳມະການຂອງ ຄລຂ ພ້ອມດ້ວຍຄະນະຕິດຕາມຈາກສູນກາງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ, ທ່ານ ກົງເພັດ ແກ້ວບົວພາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ຜູ້ປະຈຳການຄະນະປະຈຳການຄະນະກຳມະການເລືອກຕັ້ງແຂວງ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດວຽກງານຂອງ ຄລຂ ໃນການກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ V ເຊິ່ງການຈັດຕັ້ງປະຕິບັດວຽກງານບາດກ້າວທີ 1-2 ແມ່ນມີຜົນສຳເລັດຫຼາຍດ້ານ ເປັນຕົ້ນແມ່ນໄດ້ຮ່າງມະຕິຂອງຄະນະປະຈຳວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນແຂວງ; ສ້າງແຜນການດຳເນີນງານຂອງ ຄລຂ; ຮ່າງມະຕິຂອງຄະນະປະຈຳ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນເມືອງ (ຄລມ); ຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄລຂ ເຊິ່ງໄດ້ກຳນົດລະອຽດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ຄລຂ ແລະ ຄະນະປະຈຳການ ຄລຂ; ຮ່າງຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ແລະ ການເຄື່ອນໄຫວຂອງອະນຸກຳມະການເລືອກຕັ້ງຂັ້ນແຂວງ ເຊິ່ງປະກອບມີ 5 ອະນຸກຳມະການ; ຮຽກໂຮມ ແລະ ດຳເນີນກອງປະຊຸມຄັ້ງປະຖົມມະລຶກ, ຜູ້ປະຈຳການຄະນະປະຈຳການ ຄລຂ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ເພື່ອຮຽກຮ້ອງໃຫ້ປະຊາຊົນບັນດາເຜົ່າພາຍໃນແຂວງໂດຍສະເພາະຜູ້ມີສິດປ່ອນບັດເລືອກຕັ້ງ ຍົກສູງສະຕິເປັນເຈົ້າຂອງປະເທດຊາດ; ອອກແຈ້ງການເພື່ອໃຫ້ບັນດາເມືອງດຳເນີນກອງປະຊຸມຄັ້ງປະຖົມ ມະລຶກ, ຖະແຫຼງຂ່າວ, ສ້າງແຜນດຳເນີນງານ ແລະ ແຕ່ງຕັ້ງບັນດາອະນຸກຳມະການຊ່ວຍວຽກ; ອອກແຈ້ງການເພື່ອໃຫ້ບັນດາອະນຸກຳມະການເລືອກຕັ້ງຂັ້ນແຂວງ ຜັນຂະຫຍາຍແຜນດຳເນີນງານຂອງ ຄລຂ; ເກັບກຳຂໍ້ມູນກ່ຽວກັບວັດຖຸອຸປະກອນຮັບໃຊ້ໃຫ້ແກ່ການເລືອກຕັ້ງ; ອອກແຈ້ງການກ່ຽວກັບການກຳນົດໜ່ວຍປ່ອນບັດເລືອກຕັ້ງ; ດຳເນີນການເຝິກອົບຮົມວຽກງານການເລືອກຕັ້ງໃຫ້ແກ່ພະນັກງານຫຼັກແຫຼ່ງຂັ້ນແຂວງ-ຂັ້ນເມືອງ; ເກັບກຳສະຖິຕິຄະນະກຳມະການແຕ່ລະຂັ້ນ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດ; ອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ໄດ້ອອກແຈ້ງການໃຫ້ບັນດາພະແນກການ-ອົງການ ຂັ້ນແຂວງ-ຂັ້ນເມືອງ ແລະ ທຸກພາກສ່ວນກ່ຽວຂ້ອງ ເພື່ອສົ່ງລາຍຊື່ເປົ້າໝາຍບຸກຄະລາ ກອນທີ່ຈະລົງສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ; ດຳເນີນກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານໃນບາດກ້າວທີ 1-2 ແລະ ວາງທິດທາງແຜນການວຽກງານບາດກ້າວທີ 3. ຈາກນັ້ນ, ກໍໄດ້ມີການແລກປ່ຽນສົນທະນາບັນຫາຕ່າງໆເປັນຕົ້ນແມ່ນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ທີ່ຕິດພັນກັບວຽກງານການກະກຽມ ແລະ ດຳເນີນການເລືອກຕັ້ງ ເພື່ອຊອກວິທີແກ້ໄຂທີ່ເປັນເອກະພາບ ພ້ອມທັງໃຫ້ທ່ວງທັນກັບເວລາທີ່ກຳນົດ, ທັງຮັບປະກັນຄວາມພ້ອມໃຫ້ແກ່ການເລືອກຕັ້ງຄັ້ງນີ້ ໃຫ້ສຳເລັດຕາມລະດັບຄາດໝາຍ.

ໂອກາດນີ້, ທ່ານ ເລັດ ໄຊຍະພອນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍບັນດາທ່ານທີ່ໄດ້ສຸມໃສ່ກະກຽມບັ້ນເລືອກຕັ້ງຄັ້ງນີ້ ພ້ອມທັງຮຽກຮ້ອງຄະນະກຳມະການເລືອກຕັ້ງຂັ້ນແຂວງ,ບັນດາອະນຸກຳມະການ ຈົ່ງຮີບຮ້ອນຈັດຕັ້ງປະຕິບັດບາງວຽກງານໃຫ້ສຳເລັດຕາມເວລາທີ່ກຳນົດ ເພື່ອຮັບປະກັນໃຫ້ປະຊາຊົນບັນດາເຜົ່າພາຍໃນແຂວງ ໂດຍສະເພາະຜູ້ມີສິດປ່ອນບັດເລືອກຕັ້ງເຂົ້າຮ່ວມການເລືອກຕັ້ງຄັ້ງນີ້ໃຫ້ມີຜົນສຳເລັດ 400% ຄື: ຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງໄປໃຊ້ສິດຄົບຖ້ວນ 100%, ຮັບປະກັນການໃຊ້ສິດມີຄວາມຖືກຕ້ອງ 100%, ຮັບປະກັນຄວາມສະຫງົບປອດໄພ100% ແລະ ຮັບປະກັນຄວາມໂປ່ງໃສ 100%.

ໃນວັນດຽວກັນ, ຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະກຳມະການເລືອກຕັ້ງແຂວງ ໄດ້ລົງຕິດຕາມ, ຊຸກຍູ້ວຽກງານກະກຽມການເລືອກຕັ້ງ ໂດຍແບ່ງອອກເປັນ 2 ຄະນະຄື: ຄະນະທີ 1 ນຳໂດຍທ່ານ ເລັດ ໄຊຍະພອນ ແລະ ທ່ານ ກົງເພັດ ແກ້ວບົວພາ ໄດ້ລົງຕິດຕາມ, ຊຸກຍູ້ຢູ່ເມືອງນາແລ ເຊິ່ງມີບັນດາທ່ານຄະນະກຳມະການເລືອກ

ອ່ານຕໍ່ໜ້າ 8

# ຕິດຕາມ, ຊຸກຍູ້ ການກະກຽມເລືອກຕັ້ງຢູ່ສະຫວັນນະເຂດ



(ສພຊ) - ວັນທີ 19 ມັງກອນ 2026 ທີ່ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ມີກອງປະຊຸມຕິດຕາມ, ຊຸກຍູ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ໂດຍການເປັນປະທານຮ່ວມຂອງທ່ານ ນາງ ອາລີ ວົງໜໍ່ບຸນທຳ ປະທານສູນກາງສະຫະພັນແມ່ຍິງລາວ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ, ກຳມະການອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ແລະ ທ່ານ ບຸນໂຈມ ອຸບົນປະເສີດ ເລຂາຄະນະບໍລິຫານງານພັກແຂວງ, ຫົວໜ້າຄະນະກຳມະການເລືອກຕັ້ງແຂວງ (ຄລຂ) ສະຫວັນນະເຂດ, ເຂົ້າຮ່ວມມີຄະນະຈາກສູນກາງ, ບັນດາຄະນະກຳມະການ ແລະ ຫົວໜ້າ-ຮອງຫົວໜ້າອະນຸກຳມະການຂອງ ຄລຂ, ຕາງໜ້າຄະນະກຳມະການເລືອກຕັ້ງຂັ້ນເມືອງ ຈາກ 5 ເມືອງ ຄື: ນະຄອນໄກສອນ ພົມວິຫານ, ອຸທຸມພອນ, ໄຊບູລີ, ຈຳພອນ ແລະ ເຊໂປນ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ; ທັງນີ້, ກໍເພື່ອຕິດຕາມ, ຊຸກຍູ້ການກະກຽມແລະດຳເນີນການເລືອກຕັ້ງຢູ່ເຂດເລືອກຕັ້ງທີ13 ໃຫ້ສຳເລັດຕາມແຜນການທີ່ກຳນົດພ້ອມທັງເກັບກຳຄຳສະເໜີ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດຕາມມະຕິ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການຂອງຂັ້ນເທິງ ເພື່ອລາຍງານຄະນະກຳມະການເລືອກຕັ້ງລະດັບຊາດ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບການກະກຽມ ແລະ ດຳເນີນການເລືອກຕັ້ງຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ຂັ້ນເມືອງ ດ້ານຂໍ້ສະດວກ, ຂໍ້ຫຍຸ້ງຍາກຕ່າງໆ ໂດຍສະເພາະແມ່ນການຈັດຕັ້ງຜັນຂະຫຍາຍບັນດາມະຕິກຳຂອງຄະນະກຳມະການເລືອກຕັ້ງລະດັບຊາດວາງອອກ ເປັນຕົ້ນມະຕິ, ຂໍ້ຕົກລົງ, ຄຳແນະນຳ ແລະແຈ້ງການຕ່າງໆ; ຈາກນັ້ນ, ກໍໄດ້ມີແລກປ່ຽນສົນທະນາບັນຫາຕ່າງໆທີ່ຕິດພັນກັບວຽກງານກະກຽມແລະດຳເນີນການເລືອກຕັ້ງ ເພື່ອຊອກຫາວິທີແກ້ໄຂໃຫ້ທ່ວງທັນ ຮັບປະກັນການກຽມຄວາມພ້ອມໃຫ້ແກ່ບັ້ນເລືອກຕັ້ງຄັ້ງນີ້ບັນລຸຕາມລະດັບຄາດໝາຍ.

ທ່ານ ນາງ ອາລີ ວົງໜໍ່ບຸນທຳ ໄດ້ມີທິດຊີ້ນຳຕໍ່ກອງປະຊຸມວ່າ: ເພື່ອຮັບປະກັນໃຫ້ວຽກເລືອກຕັ້ງຄັ້ງນີ້ບັນລຸຜົນສຳເລັດຕາມ 4 ລະດັບຄາດໝາຍ ສະເໜີໃຫ້ສືບຕໍ່ການສຶກສາອົບຮົມ ແລະ ຍົກສູງລະດັບຄວາມຕື່ນຕົວທາງດ້ານການເມືອງໃຫ້ແກ່ຜູ້ມີສິດເລືອກຕັ້ງ ຮັບຮູ້ ແລະ ເຂົ້າໃຈຖືກຕ້ອງ ເພື່ອເຮັດໃຫ້ຜູ້ມີສິດເລືອກຕັ້ງ ໄປໃຊ້ສິດໃນວັນເລືອກຕັ້ງ ວັນທີ 22 ກຸມພາ ທີ່ຈະມາເຖິງນີ້ ໃຫ້ຄົບຖ້ວນ; ເກັບກຳບັນຊີຜູ້ມີສິດເລືອກຕັ້ງໃຫ້ຄົບຖ້ວນ, ພາຍຫຼັງສຳເລັດການຂຶ້ນບັນຊີຜູ້ມີສິດເລືອກຕັ້ງແລ້ວ ໃຫ້ສົ່ງໄປຫາຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອສັງລວມກ່ອນທີ່ຈະປະກາດຈຳນວນຜູ້ມີສິດເລືອກຕັ້ງໃນທົ່ວປະເທດໃຫ້ທັນກຳນົດເວລາ; ສືບຕໍ່ຈັດຕັ້ງການໂຄສະນາ ແລະ ປຸກລະດົມຂະບວນການ ຕາມຄຳແນະນຳຂອງຄະນະກຳມະການເລືອກຕັ້ງລະດັບຊາດ ສົມທົບໃສ່ບົດຮຽນຕົວຈິງກໍຄືຈຸດພິເສດຫຼາຍຮູບຫຼາຍສີ, ຫຼາຍຮູບແບບຂອງທ້ອງຖິ່ນຢ່າງປະດິດສ້າງ ເພື່ອເຮັດໃຫ້ຜູ້ມີສິດເລືອກຕັ້ງເຂົ້າໃຈຢ່າງຖືກຕ້ອງ ແລະ ເລິກເຊິ່ງຕໍ່ວຽກເລືອກຕັ້ງ ແລະ ຕື່ນຕົວສະໝັກໃຈໄປໃຊ້ສິດປ່ອນບັດເລືອກຕັ້ງເອົາຜູ້ແທນຂອງຕົນມານັ່ງຢູ່ສະພາ; ເອົາໃຈໃສ່ຄົ້ນຄວ້າ, ຄັດເລືອກເອົາຜູ້ສະໝັກຮັບເລືອກຕັ້ງຕາມທີ່ກຳນົດໃນກົດໝາຍເພື່ອໃຫ້ຮັບປະກັນໂຄງປະກອບດ້ານເພດ, ເຜົ່າ, ຮຸ່ນໜຸ່ມ, ຮຸ່ນກາງ, ຮຸ່ນອາວຸໂສ ໃນອັດຕາສ່ວນທີ່ເໝາະສົມ, ມີຕົວແທນຂອງທຸກຂັ້ນຄົນ, ໃຫ້ມີເພດຍິງອອກສະໝັກຮັບເລືອກຕັ້ງສະເລ່ຍລວມຢ່າງໜ້ອຍບໍ່ໃຫ້ຫຼຸດ 35% ຂອງຈຳນວນຜູ້ສະໝັກຮັບເລືອກຕັ້ງທັງໝົດໃນເຂດເລືອກຕັ້ງຂອງຕົນ ແລະ ຮັບປະກັນເລືອກຕັ້ງໃຫ້ໄດ້ເພດຍິງ ສະເລ່ຍລວມບໍ່ໃຫ້ຫຼຸດ 30%; ຈັດຕັ້ງເຊື່ອມຊຶມແລະຜັນຂະຫຍາຍຄຳແນະນຳ ສະບັບເລກທີ 16/ຄລຊ, ລົງວັນທີ 12 ມັງກອນ 2026ກ່ຽວກັບການຈັດຕັ້ງການໂຄສະນາຫາສຽງ ແລະ ການຕິດຮູບ-ປະຫວັດຫຍໍ້ຂອງຜູ້ສະໝັກຮັບເລືອກຕັ້ງ; ສຶກສາອົບຮົມປະຊາຊົນບັນດາເຜົ່າ ໃຫ້ຕື່ນຕົວເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອບໍ່ໃຫ້ມີປາກົດການຫຍໍ້ທໍ້; ສືບຕໍ່ຂຶ້ນບັນຊີຈຳນວນໜ່ວຍປ່ອນບັດເລືອກຕັ້ງ, ໜ່ວຍປ່ອນບັດເຄື່ອນທີ່, ເກັບກຳຈຳນວນຫີບບັດ, ພິມຮູບ ແລະ ຊີວະປະຫວັດຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ,ການພິມບັດລົງຄະແນນສຽງ, ກວດກາຕາປະທັບ ແລະ ອື່ນໆ.

**(ກົງທະນຸຄຳ ພິພັດເສລີ)**



# ເອກອັກຄະລັດຖະທູດສະຫະລັດ ເຂົ້າຢ້ຽມອຳລາປະທານກຳມາທິການການຕ່າງປະເທດ



(ສພຊ) - ວັນທີ 15 ມັງກອນນີ້, ທ່ານ ສັນຍາ ປຣະເສີດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາຂອງທ່ານ ນາງ ເຮັດເຕີ ວາເຣຍວາ (Heather VARIAVA) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສະຫະລັດອາເມລິກາ ປະຈຳ ສປປລາວ ໃນໂອກາດສຳເລັດການປະຕິບັດໜ້າທີ່ການທູດຢູ່ ສປປລາວ.

ໃນການພົບປະຄັ້ງນີ້, ທ່ານປະທານກຳມາທິການການຕ່າງປະເທດ ສັນຍາ ປຣະເສີດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສຳເລັດໃນການປະຕິບັດໜ້າທີ່ການທູດຢູ່ ສປປລາວ ຕະຫຼອດໄລຍະເວລາເກືອບ 2 ປີທີ່ຜ່ານມາ ເຊິ່ງທ່ານເອກອັກຄະລັດຖະທູດ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງສອງປະເທດລາວ ແລະ ອາເມລິກາ ທີ່ເຫັນໄດ້ວ່າມີການພັດທະນາແລະຂະຫຍາຍຕົວໃນຫຼາຍໆດ້ານ ເປັນຕົ້ນ ການຊຸກຍູ້ການແລກປ່ຽນຢ້ຽມຢາມລະຫວ່າງຄະນະຜູ້ແທນຂອງ ສ.ອາເມລິກາ ແລະ ສປປລາວ ໃນຫຼາຍລະດັບ ແລະ ຫຼາຍຂະແໜງການ; ການເປັນຂົວຕໍ່ປະສານງານໃນການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມືສອງຝ່າຍ ເປັນຕົ້ນ: ວຽກງານເກັບກູ້ລະເບີດບໍ່ທັນແຕກ (UXO), ການຮ່ວມມືດ້ານເສດຖະກິດ-ການຄ້າ, ການສຶກສາ, ສາທາລະນະສຸກ, ໂພຊະນາການ, ວັດທະນະທຳ ແລະ ອື່ນໆ, ພິເສດ ແມ່ນໄດ້ປະກອບສ່ວນເຂົ້າໃນການສະເຫຼີມສະຫຼອງຄົບຮອບ 70 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດລະຫວ່າງ ສປປລາວ - ສ.ອາເມລິກາ ແລະ ການຮ່ວມມືກັນຂອງສອງລັດຖະບານ ໃນໂຄງການຊຸດຄົ້ນກະດູກ ແລະ ສິ່ງເສດເຫຼືອຂອງທະຫານອາເມລິກາທີ່ຫາຍສາບສູນໃນປາງສົງຄາມ (MIA) ຄົບຮອບ 40 ປີ ໃນປີ 2025 ຜ່ານມາ. ສຳລັບປີ 2026 ນີ້ ກໍເປັນອີກປີໜຶ່ງທີ່ມີຄວາມໝາຍຄວາມສຳຄັນສຳລັບການພົວພັນສອງຝ່າຍ ຄົບຮອບ 10 ປີ ແຫ່ງການເປັນຄູ່ຮ່ວມມືແບບກວມລວມ ລະຫວ່າງ ສປປລາວ ແລະ ສ.ອາເມລິກາ. ຕໍ່ກັບສະພາແຫ່ງຊາດ, ໃນໄລຍະຜ່ານມາ ທ່ານທູດກໍໄດ້ຊ່ວຍສະໜັບສະໜູນ ແລະ ຊຸກຍູ້ບັນດາໂຄງການຕ່າງໆໂດຍສະເພາະແມ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກ່ຽວກັບການປະຕິບັດພາລະບົດບາດດ້ານນິຕິບັນຍັດ, ການສ້າງ ແລະປັບປຸງນິຕິກຳ, ການສະໜັບສະໜູນດ້ານທຶນຮອນໃນການສ້າງບຸກຄະລາກອນຮັບໃຊ້ໃຫ້ແກ່ການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຂອງສະພາແຫ່ງຊາດລາວ ທີ່ໄດ້ຈັດໃນປີ 2024 ແລະ ດຳເນີນໄປດ້ວຍຜົນສຳເລັດຢ່າງຈົບງາມ.

ໂອກາດດຽວກັນ, ທ່ານເອກອັກຄະລັດຖະທູດນາງເຮັດເຕີ ວາເຣຍວາ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນໃນຄັ້ງນີ້ ແລະ ສະແດງຄວາມຂອບໃຈຕໍ່ລັດຖະບານ ສປປລາວ ກໍຄືສະພາແຫ່ງຊາດ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຮ່ວມມື ຕະຫຼອດໄລຍະການປະຕິບັດໜ້າທີ່ການທູດຂອງຕົນຢູ່ ສປປລາວ ຈົນໄດ້ຮັບຜົນສຳເລັດເປັນຢ່າງດີ, ພ້ອມທັງສະແດງຄວາມຫວັງວ່າ ສະພາແຫ່ງຊາດລາວ ຈະສືບຕໍ່ໃຫ້ຄວາມຮ່ວມມືແກ່ທ່ານເອກອັກຄະລັດຖະທູດ ສ.ອາເມລິກາ ປະຈຳ ສປປລາວ ຄົນໃໝ່ ທີ່ຈະມາຮັບໜ້າທີ່ໃນຕໍ່ໜ້າ ເພື່ອຮ່ວມກັນສືບຕໍ່ຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືລະຫວ່າງສອງປະເທດ ໃຫ້ເປັນຮູບປະທຳຍິ່ງໆຂຶ້ນ.

# ມອບ-ຮັບ ປະຕິທິນກົດໝາຍ ປີ 2026




(ສພຊ) - ຕອນສວາຍວັນທີ 21 ມັງກອນນີ້ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບປະຕິທິນກົດໝາຍ ປີ 2026 ໃຫ້ແກ່ສະພາແຫ່ງຊາດ ເພື່ອນຳໃຊ້ເຂົ້າໃນການເຜີຍແຜ່ ແລະ ປູກຈິດສຳນຶກໃຫ້ແກ່ຊຸມຊົນໃນ ສປປລາວ ກ່ຽວກັບກົດໝາຍ ແລະ ລະບຽບການ, ເວົ້າສະເພາະທີ່ກ່ຽວກັບສິດ ແລະ ພັນທະຂອງພົນລະເມືອງລາວ ໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດ; ປະຕິທິນທີ່ນຳມາມອບໃນຄັ້ງນີ້ ມີແບບແຂວນຝາ 2,000 ສະບັບ ແລະ ແບບຕັ້ງໂຕະ 50 ສະບັບ. ກ່າວມອບໂດຍທ່ານ ນາງ ວະນິດາຄວງວິຈິດຫົວໜ້າກອງເລຂາກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ແລະ ກ່າວຮັບໂດຍທ່ານ ນາງ ດາວເພັດ ສີຫາວົງ ຫົວໜ້າກົມການເງິນ, ຫ້ອງວ່າການສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ໂອກາດນີ້, ທ່ານ ນາງ ດາວເພັດ ສີຫາ ວົງ ໄດ້ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນມອບປະຕິທິນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**



# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຢູ່ເມືອງສິບເບົາ




## ພົບປະ...

(ຕໍ່ຈາກໜ້າ 1)

ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ IV ຢູ່ບ້ານນາຄຳ ເມືອງໄຊພູທອງ ແຂວງສະຫວັນນະເຂດ ໂດຍມີບັນດາທ່ານເລຂາ, ຮອງເລຂາ, ຄະນະປະຈຳພັກເມືອງ ແລະ ການນຳຂອງຂະແໜງການປະຈຳເມືອງ, ບັນດາເລຂາພັກບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນກຸ່ມບ້ານທີ 3 ແລະ ກຸ່ມບ້ານທີ 6 ເຂົ້າຮ່ວມ.

ການລົງພົບປະຄັ້ງນີ້, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບຈຸດພິເສດ, ທີ່ຕັ້ງ ແລະ ການເຄື່ອນໄຫວວຽກງານຂອງບ້ານ; ຈາກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ ກໍໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງສອງກອງປະຊຸມດັ່ງກ່າວ ໂດຍໄດ້ຍົກໃຫ້ເຫັນບັນດາບັນຫາທີ່ຍົກຂຶ້ນໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ແລະ ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ ສະຫວັນນະເຂດ, ບັນດາເອກະສານທີ່ໄດ້ຮັບຮອງເອົາໃນກອງປະຊຸມດັ່ງກ່າວ.

ຫຼັງຈາກນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ເນັ້ນໜັກບາງບັນຫາພົ້ນເດັ່ນທີ່ກອງປະຊຸມສະໄໝສາມັນເທື່ອທີ 10 ພິຈາລະນາ ແລະ ສັງລວມບາງຕົວເລກພົ້ນເດັ່ນໃນການເຄື່ອນໄຫວໄລຍະ 5 ປີທີ່ຜ່ານມາ ເຊິ່ງ ສພຊ ໄດ້ພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍທັງໝົດ 87 ສະບັບ ໃນນີ້, ສ້າງໃໝ່ 24 ສະບັບ ແລະ ປັບປຸງ 63 ສະບັບ ເທົ່າກັບ 90.62%; ດຳເນີນກອງປະຊຸມສະໄໝສາມັນ ແລະ ສະໄໝວິສາມັນຂອງສະພາແຫ່ງຊາດ 12 ຄັ້ງ, ພິຈາລະນາຫົວຂໍ້ ແລະ ເນື້ອໃນ ທັງໝົດ 196 ເນື້ອໃນ ແລະ ອອກເປັນມະຕິ ຈຳນວນ 106 ສະບັບ; ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ທັງໝົດ 60 ຄັ້ງ, ພິຈາລະນາຫົວຂໍ້ທັງໝົດ 768 ເນື້ອໃນ ແລະ ອອກເປັນມະຕິຈຳນວນ 519 ສະບັບ.

ສັງລວມແລ້ວ, ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ແມ່ນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX (2021-2025) ທ້າຍສະໄໝເຂົ້າສູ່ວຽກງານຕົວຈິງ, ເປັນໝາກຜົນລວມຍອດທາງສະຕິປັນຍາ, ສິດປະຊາທິປະໄຕ ກໍຄືຜົນຂອງການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາທ່ານ ສສຊ, ການຕັດສິນໃຈສູງຂອງລັດຖະບານ, ອົງການລັດທີ່ກ່ຽວຂ້ອງທີ່ມີຄວາມພະຍາຍາມ ແລະ ມີມາດຕະການຕົວຈິງໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ຕົກໄປເທື່ອລະກ້າວ ເພື່ອສ້າງຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການນຳພາຂອງພັກ, ລັດຖະບານ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ມີຄວາມໜັກແໜ້ນຂຶ້ນເລື້ອຍໆ.

ໂອກາດນີ້, ໃນການເປັນສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງ, ທ່ານຍັງໄດ້ສະແດງຄວາມຂອບໃຈຕໍ່ປະຊາຊົນຜູ້ມີສິດເລືອກຕັ້ງໃນເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ທີ່ໄດ້ໃຫ້ການສະໜັບສະໜູນໃນການເຄື່ອນໄຫວເປັນຕົວແທນແຫ່ງສິດ, ຜົນປະໂຫຍດຂອງປະຊາຊົນ ໃນຕະຫຼອດໄລຍະ 5 ປີທີ່ຜ່ານມາ, ສະແດງຄວາມຂອບໃຈພໍ່ແມ່ປະຊາຊົນຊາວແຂວງສະຫວັນນະເຂດທີ່ໄດ້ໃຫ້ຄວາມໄວ້ວາງໃຈ ເລືອກຕັ້ງເອົາມາເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງຕົນ, ແລະສະແດງຄວາມຫວັງວ່າບັນດາທ່ານຜູ້ມີສິດ ຈະເຂົ້າຮ່ວມໃນບັ້ນເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ໃຫ້ໄດ້ຕາມຄາດໝາຍ.

ໂອກາດລົງເຄື່ອນໄຫວຢູ່ເມືອງໄຊພູທອງຄັ້ງນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຍັງໄດ້ນຳເອົາເຄື່ອງຊ່ວຍເຫຼືອປະກອບມີເຄື່ອງນຸ່ງຫົ່ມ, ອຸປະກອນຫຼິ້ນກິລາ, ປຶ້ມ, ບິກ ແລະ ເຄື່ອງບໍລິໂພກຈຳນວນໜຶ່ງລວມມູນຄ່າ 12 ລ້ານກວ່າກີບ ມອບໃຫ້ເມືອງ ເພື່ອນຳໄປແຈກຢາຍຕໍ່ໃຫ້ພໍ່ແມ່ປະຊາຊົນ ແລະ ນັກຮຽນຜູ້ທີ່ທຸກຍາກຂາດເຂີນຢູ່ເຂດຫ່າງໄກສອກຫຼີກ.

**(ກົງທະນູຄຳ ພິພັດເສລີ)**

(ສພຂ) - ວັນທີ 20 ມັງກອນຜ່ານມາ, ທ່ານ ແກ້ວຈະເລີນ ເຊ່ຍຢົ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຢູ່ເທດສະບານເມືອງສິບເບົາ ແຂວງຫົວພັນ ໂດຍມີເລຂາພັກເມືອງ, ປະທານຄະນະກຳມະການປົກຄອງເມືອງ, ຄະນະປະຈຳພັກເມືອງ, ນາຍແລະພົນທະຫານ-ຕຳຫຼວດ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນເມືອງເຂົ້າຮ່ວມທັງໝົດ 108 ຄົນ ຍິງ 47 ຄົນ; ທັງນີ້ ກໍເພື່ອນຳເອົາບັນດາເນື້ອໃນ ແລະ ມະຕິຕ່າງໆທີ່ໄດ້ຮັບຮອງຢູ່ກອງປະຊຸມ ເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ.

ພາຍຫຼັງເຜີຍແຜ່ແລ້ວ, ທ່ານໄດ້ໂອ້ລົມ ແລະ ເນັ້ນໜັກໃຫ້ພະນັກງານ ມີຄວາມອຸ່ນອຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍຈາກການຈັດຕັ້ງ ໃນການບໍລິການຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດ ແລະ ຮັກສາມູນເຊື້ອຄວາມສາມັກຄີ ຊ່ວຍເຫຼືອເຊິ່ງກັນແລະກັນ, ອະນຸລັກ, ສົ່ງເສີມຮີດຄອງປະເພນີບັນດາເຜົ່າ ແລະ ພ້ອມກັນໃຫ້ຄຳແນະນຳກ່ຽວກັບການດຳລົງຊີວິດແບບໃໝ່ແກ່ປະຊາຊົນ ເພື່ອຮັບມືກັບບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວິທີທຳການຜະລິດການປູກ-ການລ້ຽງເປັນສິນຄ້າສົ່ງອອກ ເພື່ອພັດທະນາບ້ານ, ເມືອງ ໃຫ້ມີຄວາມຈະເລີນກ້າວໜ້າ ແລະ ສີວິໄລຂຶ້ນເລື້ອຍໆ. ທ່ານຍັງໄດ້ແນະນຳ ແລະ ຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງພາຍໃນເມືອງ ພ້ອມກັນໄປໃຊ້ສິດປ່ອນບັດເລືອກຕັ້ງເອົາສສຊປະຈຳເຂດເລືອກຕັ້ງທີ 8 ຊຸດທີ X ແລະ ສະພາປະຊາຊົນແຂວງຫົວພັນ ຊຸດທີ V ໃນວັນທີ 22 ກຸມພາທີ່ຈະມາເຖິງນີ້ ໃຫ້ມີຜົນສຳເລັດ.



## ຜົນສຳເລັດ...

(ຕໍ່ຈາກໜ້າ 1)

ຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດການດຳເນີນກອງປະຊຸມວິສາມັນຂອງຄະນະປະຈຳສະພາແຫ່ງຊາດເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມວິສາມັນຂອງຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນຂຶ້ນໃນຕອນເຊົ້າຂອງວັນເສົາທີ 17 ມັງກອນ 2026 ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ, ມີບັນດາທ່ານຮອງປະທານຄະນະປະຈຳ, ບັນດາທ່ານກຳມະການຄະນະປະຈຳສະພາແຫ່ງຊາດ ເຂົ້າຮ່ວມຢ່າງພ້ອມພຽງ ເຊິ່ງກອງປະຊຸມໄດ້ຄົ້ນຄວ້າພິຈາລະນາໜັງສືສະເໜີຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 16 ມັງກອນ 2026 ກ່ຽວກັບການພິຈາລະນາຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານການນຳຂັ້ນສູງ ໄປຮັບໜ້າທີ່ໃໝ່, ຄົ້ນຄວ້າພິຈາລະນາຄຳສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 168/ນຍ, ລົງວັນທີ 16 ມັງກອນ 2026 ກ່ຽວກັບການພິຈາລະນາຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານການນຳຂັ້ນສູງ ໄປຮັບໜ້າທີ່ໃໝ່ ແລະ ຄຳສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 169/ນຍ, ລົງວັນທີ 16 ມັງກອນ 2026 ກ່ຽວກັບການຮັບຮອງເອົາຄຳສະເໜີພັກການ-ຮັບອຸດໜູນບຳນານຂອງສະມາຊິກລັດຖະບານ; ຜ່ານການຄົ້ນຄວ້າພິຈາລະນາ, ກອງປະຊຸມໄດ້ເຫັນດີເປັນເອກະພາບຕົກລົງຮັບຮອງເອົາດັ່ງນີ້:

1. ຮັບຮອງເອົາການສະເໜີຂອງປະທານປະເທດ ກ່ຽວກັບການຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານການນຳຂັ້ນສູງ ໄປຮັບໜ້າທີ່ໃໝ່ ມີດັ່ງນີ້:

1) ຮັບຮອງເອົາການຍົກຍ້າຍທ່ານ ໄຊຊະນະ ໂຄດພູທອນ ກຳມະການສູນກາງພັກ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໄປຮັບໜ້າທີ່ໃໝ່ຢູ່ແຂວງຄຳມ່ວນ;

2) ຮັບຮອງເອົາການແຕ່ງຕັ້ງທ່ານ ພົນຈັດຕະວາ ນາງ ລີວົງ ລາວລີ ກຳມະການສູນກາງພັກ ເປັນຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

2. ຮັບຮອງເອົາການສະເໜີຂອງນາຍົກລັດຖະມົນຕີກ່ຽວກັບການຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານການນຳຂັ້ນສູງ ໄປຮັບໜ້າທີ່ໃໝ່ ມີດັ່ງນີ້:

1) ຍົກຍ້າຍທ່ານ ພົນເອກ ວິໄລ ຫຼ້າຄຳຟອງ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ໄປຮັບໜ້າທີ່ໃໝ່ຢູ່ຫ້ອງວ່າການສູນກາງພັກ;

2) ຍົກຍ້າຍທ່ານຄຳພັນ ພົມມະທັດ ກຳມະການກົມການເມືອງສູນກາງພັກ, ປະທານອົງການກວດກາແຫ່ງລັດແລະຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ໄປຮັບໜ້າທີ່ໃໝ່;

3) ຍົກຍ້າຍທ່ານ ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ໄປຮັບໜ້າທີ່ໃໝ່ຢູ່ສູນກາງແນວລາວສ້າງຊາດ;

4) ແຕ່ງຕັ້ງທ່ານ ວັນໄຊ ພອງສະຫວັນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ ໄປຮັບໜ້າທີ່ໃໝ່ເປັນປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ;

5) ແຕ່ງຕັ້ງທ່ານ ພົນໂທ ວັນທອງ ກອງມະນີ ເລຂາທິການສູນກາງພັກ ໄປຮັບໜ້າທີ່ໃໝ່ເປັນລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ.

3. ຮັບຮອງເອົາການສະເໜີຂອງນາຍົກລັດຖະມົນຕີກ່ຽວກັບການພັກການຮັບອຸດໜູນບຳນານຂອງທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ.



## ຕິດຕາມ...

(ຕໍ່ຈາກໜ້າ 1)

ດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດມະຕິ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການຂອງຂັ້ນເທິງ ເພື່ອລາຍງານຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ).

ວັນທີ 19 ມັງກອນ 2026, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ, ຮອງຫົວໜ້າອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ພ້ອມດ້ວຍຄະນະ ໄດ້ລົງຕິດຕາມ, ຊຸກຍູ້ ວຽກງານກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ຊຸດທີ X ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ(ສສນວ) ຊຸດທີ V; ໃນໂອກາດນີ້, ທ່ານ ບຸນທານ ພຸດທະວົງສາ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ກຳມະການຄະນະກຳມະການເລືອກຕັ້ງນະຄອນຫຼວງວຽງຈັນ(ຄລນວ) ໄດ້ຮ່ວມຄະນະ ເພື່ອລົງຕິດຕາມ, ຊຸກຍູ້ ຢູ່ເມືອງປາກງື່ມ ເຊິ່ງມີບັນດາທ່ານໃນຄະນະກຳມະການເລືອກຕັ້ງເມືອງ (ຄລມ), ອະນຸກຳມະການແລະກອງເລຂາຊ່ວຍວຽກ ຄລມ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ຄຳໝູນ ຕຽງທະລາດ ກຳມະການພັກ ນວ, ເລຂາຄະນະພັກເມືອງ, ປະທານຄະນະກຳມະການເລືອກຕັ້ງເມືອງປາກງື່ມ ໄດ້ລາຍງານສະພາບລວມຂອງເມືອງ ແລະ ຄວາມຄືບໜ້າໃນການກະກຽມເລືອກຕັ້ງ ໃນບາດກ້າວທີ 1 ແລະ ບາດກ້າວທີ2ເຊິ່ງມີຜົນສຳເລັດຫຼາຍດ້ານຕາມແຜນການທີ່ວາງໄວ້; ເຂດເລືອກຕັ້ງເມືອງປາກງື່ມ ມີທັງໝົດ53ບ້ານ, ກຳນົດໜ່ວຍປ່ອນບັດເລືອກຕັ້ງ 53 ໜ່ວຍ ແລະ ໜ່ວຍເຄື່ອນທີ່ 1 ໜ່ວຍ ລວມທັງໝົດ 54 ໜ່ວຍ; ໄດ້ເອົາໃຈໃສ່ຈັດຕັ້ງການເຊື່ອມຊຶມແຜນດຳເນີນງານຂອງ ຄລນວ ເພື່ອກະກຽມ ແລະ ດຳເນີນການເລືອກຕັ້ງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 149 ຄົນ ຍິງ 21 ຄົນ; ຈັດຕັ້ງການກວດກາ-ເກັບກຳຄືນສະຖິຕິຜູ້ມີສິດປ່ອນບັດເລືອກຕັ້ງ ໂດຍມອບໃຫ້ບັນດາອະນຸກຳມະການໜ່ວຍເລືອກຕັ້ງ ສົມທົບກັບກຸ່ມບ້ານ ໃນການເກັບກຳຈຳນວນພົນລະເມືອງຜູ້ມີສິດເລືອກຕັ້ງ ໃຫ້ສຳເລັດຕາມກຳນົດແລະຂຶ້ນແຜນອຸປະກອນຮັບໃຊ້ໃຫ້ແກ່ການເລືອກຕັ້ງຢ່າງຄົບຖ້ວນ.

ວັນທີ20-22ມັງກອນ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ແລະ ທ່ານ ບຸນສອນ ເພັດດາວັນ ປະທານສະພາປະຊາຊົນແຂວງວຽງຈັນ, ຮອງປະທານຄະນະກຳມະການເລືອກຕັ້ງແຂວງ (ຄລຂ) ວຽງຈັນ ພ້ອມດ້ວຍຄະນະ ໄດ້ລົງຕິດຕາມ, ຊຸກຍູ້ ວຽກງານກະກຽມການເລືອກຕັ້ງ ສສຊ ປະຈຳເຂດເລືອກຕັ້ງທີ 10 ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ຢູ່ເມືອງແອດ ແລະ ເມືອງກາສີ ເຊິ່ງມີບັນດາທ່ານຄະນະກຳມະການເລືອກຕັ້ງເມືອງ, ອະນຸກຳມະການ ແລະ ກອງເລຂາຊ່ວຍວຽກ ຄລມ ເຂົ້າຮ່ວມຢ່າງພ້ອມພຽງ. ທ່ານ ອ່ອນຕາ ທຳມະວົງສາ ກຳມະການພັກແຂວງ, ເລຂາພັກເມືອງ, ປະທານຄະນະກຳມະການເລືອກຕັ້ງເມືອງແອດ ແລະ ທ່ານ ອຳໄພ ໂສລັດຕະນະວົງ ກຳມະການພັກແຂວງ, ເລຂາພັກເມືອງ, ປະທານຄະນະກຳມະການເລືອກຕັ້ງເມືອງກາສີ ໄດ້ລາຍງານສະພາບລວມຂອງເມືອງ ແລະ ຄວາມຄືບໜ້າໃນການກະກຽມເລືອກຕັ້ງ ໃນບາດກ້າວທີ 1 ແລະ 2 ເຊິ່ງມີຜົນສຳເລັດຫຼາຍດ້ານຕາມແຜນການທີ່ວາງໄວ້; ເຂດເລືອກຕັ້ງເມືອງແອດ ມີ 33 ບ້ານ, ມີ 1 ກຸ່ມເທດສະບານ, 3 ກຸ່ມບ້ານພັດທະນາ ແລະ 1 ຈຸດສຸມພັດທະນາຂອງແຂວງ, ມີ 4,778 ຄົວເຮືອນ, ມີ 5,439 ຄອບຄົວ, ມີພົນລະເມືອງ 25,596 ຄົນ ຍິງ 12,738 ຄົນ; ສຳລັບເຂດເລືອກຕັ້ງເມືອງກາສີ ໄດ້ກຳນົດໜ່ວຍປ່ອນບັດທັງໝົດ 51 ໜ່ວຍ ແລະ ມີໜ່ວຍເຄື່ອນທີ່ 5 ໜ່ວຍ; ຄົ້ນຄວ້າຄະນະໜ່ວຍປ່ອນບັດ, ຄະນະປ້ອງກັນປະຈຳແຕ່ລະໜ່ວຍ ລວມທັງຄະນະຮັບຜິດຊອບຂັ້ນເມືອງລວມທັງໝົດ 869 ຄົນ; ລົງກວດກາ ແລະ ເກັບກຳຂໍ້ມູນພົນລະເມືອງຕາມຜົນຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສ ປີ 2025 ມີທັງໝົດ 45,706 ຄົນ ຍິງ 22,477 ຄົນ ໃນນັ້ນ, ຜູ້ທີ່ມີສິດເລືອກຕັ້ງນັບແຕ່ອາຍຸ 18 ປີຂຶ້ນໄປ ມີ 25,566 ຄົນ ຍິງ 11,891 ຄົນ ແລະ ໄດ້ກະກຽມອຸປະກອນຮັບໃຊ້ຢ່າງຄົບຖ້ວນ. ນອກນີ້, ຍັງໄດ້ຮັບຟັງການລາຍງານຂອງບັນດາອະນຸກຳມະການຂອງ ຄລຂ ແລະ ຄລມ ກ່ຽວກັບການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການເລືອກຕັ້ງທີ່ຈະຈັດຂຶ້ນໃນວັນທີ 22 ກຸມພາທີ່ຈະມາເຖິງ.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ປະກອບຄຳເຫັນເພື່ອປຶກສາຫາລືແລກປ່ຽນເຖິງບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກແລະແຜນການທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ ເພື່ອກະກຽມຄວາມພ້ອມໃນດ້ານຕ່າງໆ ແນໃສ່ຮັບປະກັນການດຳເນີນຂັ້ນເລືອກຕັ້ງ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດບັນລຸຜົນຕາມລະດັບຄາດໝາຍ ພ້ອມທັງຮັບປະກັນ 4ຄາດໝາຍໃຫຍ່ຄື: ຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງໄປໃຊ້ສິດຄົບຖ້ວນ 100%, ຮັບປະກັນການໃຊ້ສິດມີຄວາມຖືກຕ້ອງ 100%, ຮັບປະກັນຄວາມສະຫງົບຄວາມປອດໄພ 100% ແລະ ຮັບປະກັນຄວາມໂປ່ງໃສ 100%.

ໃນໂອກາດນີ້, ທ່ານສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນເນັ້ນໜັກຕໍ່ການຈັດຕັ້ງພັກ-ລັດ, ອຳນາດການປົກຄອງ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ປະຊາຊົນລາວບັນດາເຜົ່າຖືເອົາການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ເປັນວຽກບຸລິມະສິດທີ່ສຳຄັນ ແລະ ເປັນວຽກໃຈກາງໃນຂະນະນີ້ ເພື່ອປະຕິບັດໃຫ້ໄດ້ຄືແນວນັ້ນພວກເຮົາຕ້ອງສຸມໃສ່5ວຽກງານຕົ້ນຕໍດັ່ງນີ້: ໂຄສະນາເຜີຍແຜ່ນິຕິກຳ ແລະ ເອກະສານການເລືອກຕັ້ງໃຫ້ທົ່ວພະນັກງານ, ທະຫານ-ຕຳຫຼວດ ແລະ ປະຊາຊົນພາຍໃນເມືອງ ໃຫ້ເຊື່ອມຊຶມ ແລະ ເຂົ້າໃຈຢ່າງທົ່ວເຖິງ; ກວດກາຄືນຜູ້ມີສິດເລືອກຕັ້ງຢ່າງຈະແຈ້ງຊັດເຈນ(ຕາມສຳມະໂນຄົວຜູ້ມີສິດເລືອກຕັ້ງນັບແຕ່ອາຍຸ 18 ປີຂຶ້ນໄປ ແລະ ໃຫ້ບຸລິມະສິດແກ່ຜູ້ມີສິດເລືອກຕັ້ງທີ່ເປັນຜູ້ເຖົ້າແກ່ຊະລາ ແລະ ຄົນເຈັບຕິດຕຽງ); ຈັດຕັ້ງ ແລະ ນຳພາ ຜູ້ຮັບສະໝັກຮັບເລືອກຕັ້ງເປັນຜູ້ແທນ ເຄື່ອນໄຫວໂຄສະນາຫາສຽງ ແລະ ພົບປະປະຊາຊົນຕາມແຕ່ລະຈຸດ; ກະກຽມຫີບປ່ອນບັດ, ວັດຖຸອຸປະກອນຈຳເປັນ ແລະ ຈັດພິມບັນຊີລາຍຊື່ຂອງຜູ້ສະໝັກ ສສຂ-ສສນວ(ສຳລັບບັນຊີລາຍຊື່ຂອງຜູ້ສະໝັກ ສສຊ ແມ່ນ ຄລຊ ກະກຽມ ແລະ ຈັດພິມ) ແລະ ມອບໝາຍໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ຕິດຕາມກວດກາຜົນການກະກຽມ ແລະ ປະຕິບັດຜ່ານມາ ເພື່ອລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງຢ່າງປົກກະຕິ.

**(ຄຳສິງ ທາດາສະຫວັນ)**



## ຊຸກຍູ້...

(ຕໍ່ຈາກໜ້າ 1)

ມະການບໍລິຫານ, ພິທີການແລະງົບປະມານ, ທ່ານ ທອງລີ ສີສຸລິດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ກຳມະການ ຄລຊ, ກຳມະການອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ແລະ ທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ, ຮອງຫົວໜ້າອະນຸກຳມະການເລຂານຸການ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມ, ຊຸກຍູ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຢູ່ແຂວງຈຳປາສັກແລະແຂວງອັດຕະປືຕາມລຳດັບໂດຍການຕ້ອນຮັບ ແລະ ຮ່ວມເຮັດວຽກຂອງທ່ານປອ.ອາລຸນໄຊສູນນະລາດ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານຄະນະກຳມະການເລືອກຕັ້ງແຂວງ (ຄລຂ) ຈຳປາສັກ ແລະ ທ່ານ ພົທ. ວັນທອງ ກອງມະນີ ເລຂາທິການສູນກາງພັກ, ປະທານຄະນະກຳມະການ ຄລຂ ອັດຕະປື ພ້ອມດ້ວຍບັນດາຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າອະນຸກຳມະການແລະກອງເລຂາຊ່ວຍວຽກ ຄລຂ ຈຳປາສັກ ແລະ ອັດຕະປື ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ປອ. ອາລຸນໄຊ ສູນນະລາດ ລາຍງານໃຫ້ຮູ້ວ່າ: ແຂວງຈຳປາສັກ ໄດ້ກຳນົດເອົາການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ຊຸດທີ X ແລະ ສະພາປະຊາຊົນແຂວງ (ສສຂ) ຊຸດທີ V ເປັນວຽກງານຈຸດສຸມບຸລິມະສິດສູງສຸດໃນການກະກຽມຢ່າງຮີບຮ້ອນແລະມີແບບແຜນແຕ່ຫົວທີ ໂດຍການຫັນນິຕິກຳ ແລະ ເນື້ອໃນຈິດໃຈຂອງສູນກາງມາເປັນແຜນການເຄື່ອນໄຫວທີ່ລະອຽດ, ສ້າງບັນຍາກາດການເມືອງທີ່ຟົດຟື້ນແລະກວ້າງຂວາງ ຕາມແຜນດຳເນີນງານ 3 ໄລຍະ ແລະ 4 ບາດກ້າວ ຄື: ໄລຍະທີ 1 ດຳເນີນບາດກ້າວທີ 1 ກະກຽມນິຕິກຳຮັບໃຊ້ການເລືອກຕັ້ງ, ໄລຍະທີ 2 ດຳເນີນບາດກ້າວທີ 2 ຜັນຂະຫຍາຍ ແລະ ບາດກ້າວທີ 3 ຕິດຕາມກວດກາ, ໄລຍະທີ 3 ດຳເນີນບາດກ້າວທີ 4 ພາຍຫຼັງສຳເລັດການເລືອກຕັ້ງ.

ທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ຮອງປະທານ ຄລຂ ອັດຕະປື ລາຍງານໃຫ້ຮູ້ວ່າ: ແຂວງອັດຕະປື ປະກອບມີ 5 ເມືອງ, 140 ບ້ານ, ປະຊາກອນ 170,615 ຄົນ ຍິງ 84,800 ຄົນ (ສະຖິຕິປີ 2024) ແລະ ມີ 11 ຊົນເຜົ່າ; ໄດ້ກະກຽມປະກາດຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ປະຈຳເຂດເລືອກຕັ້ງທີ 17 ຊຸດທີ X ແລະ ສສຂ ຊຸດທີ V; ສືບຕໍ່ເກັບກຳສະຖິຕິຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງໃນທົ່ວແຂວງ; ປະເມີນຄືນການກະກຽມອຸປະກອນຮັບໃຊ້ການເລືອກຕັ້ງໃຫ້ທັນຕາມກຳນົດເວລາ; ສືບຕໍ່ຈັດພິມ ແລະ ຜະລິດອຸປະກອນຮັບໃຊ້ຕ່າງໆ ເພື່ອຮັບໃຊ້ໃຫ້ແກ່ການເລືອກຕັ້ງເປັນຕົ້ນ: ຫີບບັດ, ບັດລົງຄະແນນສຽງ, ປະຫວັດຜູ້ສະໝັກ, ໃບຢັ້ງຢືນຂອງຜູ້ມີສິດປ່ອນບັດເລືອກຕັ້ງ, ບັດຕິດເອິກຂອງອະນຸຮັບຜິດຊອບຕ່າງໆ ແລະ ອື່ນໆ; ສືບຕໍ່ຕິດຕາມ ແລະ ຊຸກຍູ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ໃນການຈັດຕັ້ງເຊື່ອມຊຶມ ແລະ ເຜີຍແຜ່ບັນດາເອກະສານກ່ຽວກັບການເລືອກຕັ້ງໃຫ້ສຳເລັດ; ຄົ້ນຄວ້າຂຶ້ນບັນຊີລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ເພື່ອສະຫຼຸບຕີລາຄາວຽກງານໃນບາດກ້າວທີ 2ແລະວາງແຜນການຈັດຕັ້ງປະຕິບັດວຽກງານໃນບາດກ້າວທີ 3 ແລະ 4 ໃຫ້ສຳເລັດຕາມລະດັບຄາດໝາຍ.

ຈາກນັ້ນ, ກໍໄດ້ມີການແລກປ່ຽນຄຳຄິດຄຳເຫັນຢ່າງສ້າງສັນ ແລະ ມີຈຸດສຸມ ເພື່ອເຮັດໃຫ້ການກະກຽມການເລືອກຕັ້ງຄັ້ງນີ້ ທີ່ຈະຈັດຂຶ້ນໃນວັນອາທິດທີ 22 ກຸມພາ 2026 ມີຄວາມພ້ອມຮອບດ້ານແລະຮັບປະກັນການຈັດຕັ້ງປະຕິບັດໃຫ້ບັນລຸຄາດໝາຍ 4 ດ້ານຄື: 1. ນຳພາຜູ້ມີສິດເລືອກຕັ້ງ ໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ100%, 2. ນຳພາຜູ້ມີສິດເລືອກຕັ້ງ ໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງຖືກຕ້ອງຕາມລະບຽບການ 100%, 3. ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະມີຄວາມປອດໄພ100%, 4. ນຳພາວຽກງານປ່ອນບັດເລືອກຕັ້ງ ໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ 100%.

**(ນາງ ກຸກກິກ ບຸດດາໄຊ)**

# ມອບ-ຮັບອຸປະກອນການແພດ ແກ່ໂຮງໝໍເມືອງອາດສະພອນ




(ສພຂ)-ວັນທີ 11 ທັນວາຜ່ານມາ, ທີ່ໂຮງໝໍເມືອງອາດສະພອນ ແຂວງສະຫວັນນະເຂດ ໄດ້ມີພິທີມອບ-ຮັບເຄື່ອງອຸປະກອນການແພດ (ມືສອງ) ທີ່ໄດ້ຮັບການຊ່ວຍເຫຼືອລ້າຈາກ PHAMM, ເຂດ AUVERGNE, ປະເທດຝຣັ່ງ ແກ່ໂຮງໝໍເມືອງອາດສະພອນ; ຕາງໜ້າມອບໂດຍທ່ານນິດສະຫວາດຊຸມພົນ ພັກດີຕາງໜ້າຄະນະບໍລິຫານສະມາຄົມເພື່ອນມິດປາກເຊ ແລະ ຕາງໜ້າຮັບໂດຍທ່ານ ນາງພູທອນ ແກ້ວພູວົງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ຈາກນັ້ນ, ທ່ານ ນາງພູທອນ ແກ້ວພູວົງ ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ກໍ ສົ່ງມອບຕໍ່ ແກ່ໂຮງໝໍເມືອງອາດສະພອນ ຕາງໜ້າຮັບໂດຍທ່ານ ກອງແລ ອ່ອນຈັນທະລີໄຊ ປະທານຄະນະກຳມະການປົກຄອງເມືອງອາດສະພອນ; ມີທ່ານ ຄຳດີ ສຸວັນນະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະບັນດາເຜົ່າສະພາປະຊາຊົນແຂວງ; ບັນດາທ່ານຄະນະບໍລິຫານສະມາຄົມເພື່ອນມິດປາກເຊ; ທ່ານ ດຣ. ຂັນໄຊ ບຸດດາວົງ ຫົວໜ້າຫ້ອງການ ສາທາລະນະສຸກເມືອງອາດສະພອນ; ມີຄະນະອຳນວຍການໂຮງໝໍເມືອງ ແລະ ພະນັກງານແພດໝໍ ຮ່ວມເປັນສັກຂີພະຍານ.

ເຄື່ອງທີ່ນຳມາມອບຄັ້ງນີ້ປະກອບມີ: ອຸປະກອນການແພດ, ເຟີນິເຈີ, ເຄື່ອງໃຊ້ສິ້ນເປືອງທາງການແພດ, ເຂັມສັກຢາ, ເຄື່ອງພົ່ນ, ເຄື່ອງດູດສະເຫຼດ, ເຄື່ອງມືຊ່ວຍຫາຍໃຈ Autoclave, ຜ້າພັນບາດແຜ ແລະອຸປະກອນເຂົ້າເຝືອກລວມມູນຄ່າ 24,891.75 ເອີໂຣ (600 ລ້ານກວ່າກີບ).

# ຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ ປະຊຸມຄົບຄະນະ ປະຈຳປີ 2025



(ສພຂ) - ວັນທີ 17 ທັນວາຜ່ານມາ ທີ່ຫ້ອງຮັບຮອງຂອງສະໂມສອນແຂວງສາລະວັນຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ ສພຂ ໄດ້ຈັດກອງປະຊຸມຄົບຄະນະ ປະຈຳປີ 2025 ຂຶ້ນ ໂດຍການເປັນປະທານຂອງທ່າ ນາງທອງໃບ ໄຊຍະສານ ຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການວັດທະນະທຳສັງຄົມແລະບັນດາເຜົ່າ; ເຂົ້າຮ່ວມມີທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ມີບັນດາທ່ານຮອງປະທານຄະນະກຳມະການ ແລະ ສະມາຊິກສະພາປະຊາຊົນແຂວງ ທີ່ສັງກັດຢູ່ໃນຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ; ຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ, ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານໄລຍະ 5 ປີ (2021-2025), ຄາດຄະເນທິດທາງແຜນການ5ປີ(2026-2030), ການເຄື່ອນໄຫວວຽກງານປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ2026ຂອງຄະນະກຳມະການວັດທະນະທຳສັງຄົມ ແລະ ບັນດາເຜົ່າ ສພຂ ພ້ອມທັງຜ່ານຮ່າງມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານໄລຍະ 5 ປີ (2021-2025), ຄາດຄະເນທິດທາງແຜນການ 5 ປີ (2026-2030), ການເຄື່ອນໄຫວວຽກງານປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ2026ຂອງຄະນະກຳມະການດັ່ງກ່າວ; ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳຄິດ-ຄຳເຫັນຢ່າງກົງໄປກົງມາ ດ້ວຍຄວາມຮັບຜິດຊອບສູງ ເພື່ອເຮັດໃຫ້ບັນດາເນື້ອໃນ ມີຄວາມຖືກຕ້ອງສອດຄ່ອງສາມາດນຳມາຈັດຕັ້ງປະຕິບັດຢ່າງມີຜົນສຳເລັດຕາມທິດທາງແຜນການທີ່ວາງໄວ້.

# 11 ຫົວຂໍ້ ຈະນຳເຂົ້າພິຈາລະນາ ໃນກອງປະຊຸມ ສພຂ ສາລະວັນ




(ສພຂ)-ວັນທີ 16 ທັນວາຜ່ານມາ ທີ່ຫ້ອງປະຊຸມສະໂມສອນແຂວງ, ໄດ້ມີກອງປະຊຸມຮ່ວມລະຫວ່າງ ສະພາປະຊາຊົນແຂວງ (ສພຂ) ກັບອົງການປົກຄອງແຂວງສາລະວັນ ໂດຍການເປັນປະທານຂອງທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ປະເດີມພອນ ສິນທະນີ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ມີບັນດາຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະປະຈຳ ສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຄະນະເລຂາທິການ, ຫົວໜ້າພະແນກການອ້ອມຂ້າງແຂວງ-ອົງການລັດທຽບເທົ່າຂັ້ນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານການພົວພັນປະສານງານ ລະຫວ່າງ ສພຂ ກັບ ອົງການປົກຄອງແຂວງ ໄລຍະ 1 ປີຜ່ານມາ ທີ່ໄດ້ຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນເຊິ່ງສະແດງເຖິງຄວາມພະຍາຍາມ ແລະ ເອົາໃຈໃສ່ສູງໃນການພົວພັນປະສານງານຮ່ວມກັນ ຈົນມີຜົນສຳເລັດໃນແຕ່ລະດ້ານ ລວມທັງດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບາງບັນຫາທີ່ເຮັດໃຫ້ການປະຕິບັດ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ; ຈາກນັ້ນ, ໄດ້ຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດເຫັນ ແລະ ກ້າວໄປເຖິງການສ້າງຄວາມເປັນເອກະພາບຕໍ່ບັນດາເນື້ອໃນ ກໍຄື ຫົວຂໍ້ທີ່ຢູ່ໃນຄວາມຮັບຜິດຊອບ ຂອງອົງການປົກຄອງແຂວງໃນ11ຫົວຂໍ້ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 10 ສະພາປະຊາຊົນແຂວງຊຸດທີIV;

ນອກນີ້, ຍັງໄດ້ພ້ອມກັນຕີລາ ແລະ ຖອດຖອນບົດຮຽນກົນໄກການປະສານງານ ລະຫວ່າງ ສພຂ ກັບ ອົງການປົກຄອງແຂວງເພື່ອປັບປຸງແລະຍົກສູງປະສິດທິຜົນໃນການພົວພັນ ແລະ ປະສານງານປະຕິບັດພາລະບົດບາດ ລະຫວ່າງ ສພຂ ກັບ ບັນດາອົງການລັດຂັ້ນແຂວງ ໃຫ້ດີຂຶ້ນເທື່ອລະກ້າວ, ຮັບປະກັນໃຫ້ການປະຕິບັດພາລະບົດບາດຂອງສພຂແລະອົງການອຳນາດລັດຂັ້ນຕ່າງໆ ຂອງແຂວງ ໃຫ້ສອດຄ່ອງກັບລະບຽບກົດໝາຍ, ການເຄື່ອນໄຫວຂອງແຕ່ລະອົງການໃຫ້ມີປະສິດທິຜົນແລະປະສິດທິພາບສູງຂຶ້ນ.

**(ຈັນທີ-ດີລຳພົນ ພົມມະຈັນ)**

# ກອງປະຊຸມຄົບຄະນະ ປະຈຳປີ 2025 ຂອງ ຄສຊ




(ສພຂ) ວັນທີ 19 ທັນວາຜ່ານມາ, ຄະນະສະມາຊິກສະພາແຫ່ງຊາດ(ຄສຊ)ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ຈັດກອງປະຊຸມຄົບຄະນະປະຈຳປີ 2025 ໂດຍການເປັນປະທານຂອງທ່ານ ສີເຮັງ ທອມສົມບັດ ປະທານ ຄສຊ ປະຈຳເຂດເລືອກຕັ້ງທີ 14; ເຂົ້າຮ່ວມມີທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14; ທ່ານ ປະເດີມພອນ ສິນທະນີ ປະທານຄະນະກຳມະການປົກຄອງແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 14; ມີຄະນະປະຈຳພັກແຂວງ, ສສຊ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ປະທານຄະນະກຳມະການປົກຄອງ 8 ເມືອງ ເຂົ້າຮ່ວມໃນ;

ກອງປະຊຸມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025 ແລະ ແຜນການປີ 2026 ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 14 ເຊິ່ງເຫັນໄດ້ຂໍ້ສະດວກ ແລະ ສິ່ງທ້າທາຍຫຼາຍດ້ານ; ຈາກນັ້ນ, ໄດ້ພ້ອມກັນປະກອບຄຳເຫັນຕໍ່ບັນຫາຄົງຄ້າງທັງຊອກຫາວິທີທາງແກ້ໄຂ ໃຫ້ດີຂຶ້ນໃນຕໍ່ໜ້າ, ຮັບປະກັນການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການກະກຽມການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ທີ່ຈະເກີດຂຶ້ນໃນຕົ້ນປີ 2026 ນີ້ ໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ພ້ອມນັ້ນ, ຍັງໄດ້ຈັດພິທີມອບຫຼຽນກາລະນຶກ 50 ປີ ສະພາແຫ່ງຊາດ ໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງທີ 14; ອະດີດ ສສຊ ແລະ ການນຳຂອງແຂວງ ເພື່ອເປັນທີ່ລະນຶກແກ່ຜູ້ທີ່ມີຜົນງານ, ຄຸນງາມຄວາມດີໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕະຫຼອດໄລຍະທີ່ຜ່ານມາ;

**(ສະພາປະຊາຊົນແຂວງສາລະວັນ)**

# ກອງປະຊຸມຮ່ວມລະຫວ່າງ ຄະນະກຳມະການປົກຄອງແຂວງ ກັບ ສະພາປະຊາຊົນແຂວງ



(ສພຂ) - ເພື່ອຄົ້ນຄວ້າພິຈາລະນາ ແລະ ຕົກລົງບາງວຽກງານທີ່ສຳຄັນຂອງທ້ອງຖິ່ນ ແລະ ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນ; ວັນທີ 16 ທັນວາຜ່ານມາ ທີ່ຫ້ອງປະຊຸມຫ້ອງວ່າການແຂວງຈຳປາສັກ ໄດ້ມີກອງປະຊຸມຮ່ວມລະຫວ່າງ ຄະນະກຳມະການປົກຄອງ ແຂວງຈຳປາສັກ ກັບ ສະພາປະຊາຊົນແຂວງຈຳປາສັກ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ສຸກສະຫວັນ ວິໄລວົງ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ ແລະ ທ່ານ ສາຍທອງ ໄຊຍະວົງ ປະທານຄະນະປະຈຳສະພາປະຊາຊົນແຂວງ; ມີຮອງປະທານຄະນະກຳມະການປົກຄອງແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການປົກຄອງແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຂະແໜງການ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມທ່ານ ວັນນະສັກ ຊາດຕະກຸນ ກຳມະການພັກແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ ໄດ້ລາຍງານການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV; ຈາກນັ້ນ ທ່ານ ພົມພອນ ພົນດານຸວົງ ຄະນະປະຈຳພັກແຂວງ, ຮອງປະທານຄະນະກຳມະການປົກຄອງແຂວງ ໄດ້ລາຍງານຄວາມພ້ອມການກະກຽມບົດລາຍງານຂອງຄະນະກຳມະການປົກຄອງແຂວງ, ອົງການ ແລະ ພະແນກການກ່ຽວຂ້ອງ ທີ່ຈະລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ IV ທີ່ຍົກໃຫ້ເຫັນດ້ານຄວາມພ້ອມ ໂດຍສະເພາະການລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປະຈຳປີ ແລະ ທິດທາງແຜນການໃນປີຕໍ່ໜ້າ ແລະ ບັນຫາພົ້ນເດັ່ນທີ່ເຄັ່ງຮ້ອນຂອງແຂວງ; ຈາກນັ້ນ, ໄດ້ປະກອບຄຳເຫັນຕໍ່ການລາຍງານບົນພື້ນຖານຄວາມຮັບຜິດຊອບ ແລະ ເອກະພາບ ຮັບປະກັນໃຫ້ບັນດາເນື້ອໃນທີ່ຈະນຳເຂົ້າຄົ້ນພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ IV ຖືກຕ້ອງສອດຄ່ອງກັບການຈັດຕັ້ງປະຕິບັດວຽກງານຕົວຈິງ.

# ຄສຊ ເຂດເລືອກຕັ້ງແຂວງຈຳປາສັກ ປະຊຸມປະຈຳປີ

(ສພຂ) - ວັນທີ 17 ທັນວາຜ່ານມາ, ຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ໄດ້ເປີດກອງປະຊຸມປະຈຳປີ 2025 ຂຶ້ນ ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ພາຍໃຕ້ການເປັນປະທານຂອງທ່ານສາຍທອງ ໄຊຍະວົງ ປະທານ ຄສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ; ເຂົ້າຮ່ວມມີທ່ານ ປອ. ສຸກສະຫວັນ ວິໄລວົງ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງຈຳປາສັກ; ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ, ປະທານແນວລາວສ້າງຊາດແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ, ຄະນະກຳມະການ-ຄະນະເລຂາທິການແລະວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.



ກອງປະຊຸມໄດ້ຮັບຟັງການສະຫຼຸບລາຍງານໂດຍສັງເຂບກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (201-2025) ແລະ ແຜນການເຄື່ອນໄຫວ 5 ປີ ຕໍ່ໜ້າ (2026-2030), ແຜນການເຄື່ອນໄຫວ ປະຈຳປີ 2026 ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ຈາກທ່ານ ແກ້ວລັດຕະນະ ສີຫາວົງ ຮອງປະທານ ຄສຊ ປະຈຳເຂດເລືອກຕັ້ງທີ 15; ຈາກນັ້ນ, ໄດ້ປະກອບຄຳເຫັນຕໍ່ເນື້ອໃນບົດສະຫຼຸບການລາຍງານດັ່ງກ່າວ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສອດຄ່ອງກັບພາວະໄສ ຮັບປະກັນການປະຕິບັດສິດ, ໜ້າທີ່ ຕາມກົດໝາຍ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ຕາມທິດຍືນຍົງ ແລະ ສີຂຽວໃນໄລຍະໃໝ່ ແລະ ພ້ອມກັນຮັບຮອງມະຕິກອງປະຊຸມປະຈຳປີ 2025 ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ.

**(ສົມວົງ ໄຊມົນຕີ)**

# ກອງປະຊຸມປະຈຳປີ 2025 ຂອງ ຄສຊ ເຂດເລືອກຕັ້ງ 17



(ສພຂ) - ວັນທີ 23 ທັນວາຜ່ານມາ, ຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ໄດ້ເປີດກອງປະຊຸມປະຈຳປີ 2025 ຂຶ້ນ ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ, ພາຍໃຕ້ການເປັນປະທານຂອງທ່ານນາງ ມີນາພອນ ໄຊສົມພູ ປະທານ ຄສຊ ປະຈຳເຂດເລືອກຕັ້ງທີ 17, ປະທານສະພາປະຊາຊົນແຂວງອັດຕະປື; ມີສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17, ບັນດາພະແນກການ, ອົງການທຽບເທົ່າ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ອາດີດການນຳພັກ-ລັດ ພ້ອມດ້ວຍແຂກທີ່ຖືກເຊີນເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ໄດ້ຜ່ານຮ່າງບົດສະຫຼຸບລາຍງານໂດຍສັງເຂບ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ປະຈຳປີ 2026 ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື; ຈາກນັ້ນ, ບັນດາທ່ານຜູ້ແທນໄດ້ປະກອບຄຳເຫັນຕໍ່ເນື້ອໃນບົດສະຫຼຸບການລາຍງານດັ່ງກ່າວ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນພ້ອມທັງປະກອບຄຳເຫັນລົງເລິກໃສ່ທິດທາງແຜນການເຄື່ອໄຫວໃນຕໍ່ໜ້າ ທີ່ຈະຕ້ອງໄດ້ສຸມໃສ່ໃນການຈັດຕັ້ງປະຕິບັດຕາມພາລະບົດບາດ ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 17, ຮັບປະກັນການປະຕິບັດສິດ, ໜ້າທີ່ຕາມກົດໝາຍ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ຂອງແຂວງໃນໄລຍະໃໝ່.

ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ສະແດງຄວາມຊົມເຊີຍຜົນສຳເລັດທີ່ ຄສຊ ຍາດມາໄດ້ໃນໄລຍະຜ່ານມາເຊິ່ງສະແດງໃຫ້ເຫັນເຖິງໝາກຜົນແຫ່ງຄວາມເປັນເອກະພາບຢ່າງສູງໃນການຄົ້ນຄວ້າປະກອບຄຳເຫັນຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ທັງມີຄວາມຮັບຜິດຊອບສູງ ເພື່ອນຳໄປປັບປຸງແກ້ໄຂໃນຕໍ່ໜ້າ ແລະ ພ້ອມກັນກຳນົດທິດທາງຍຸດທະສາດ ແລະ ແຜນການເຄື່ອນໄຫວວຽກງານຢ່າງມີເປົ້າໝາຍຊັດເຈນ; ເພື່ອສືບຕໍ່ເສີມຂະຫຍາຍບົດບາດ ຂອງ ສສຊ ປະຈຳເຂດເລືອກຕັ້ງ ທີ 17 ໃຫ້ມີປະສິດທິຜົນສູງຂຶ້ນ ແລະ ນຳເອົາເນື້ອໃນຈິດໃຈທີ່ໄດ້ຮັບຮອງໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງຢ່າງມີຄຸນນະພາບ, ເຮັດໃຫ້ການເຄື່ອນໄຫວວຽກງານໃນຕໍ່ໜ້າບັນລຸເປົ້າໝາຍ ທີ່ວາງໄວ້ຢ່າງມີຜົນສຳເລັດທີ່ຍິ່ງໃຫຍ່ກວ່າເກົ່າ.

**(ວິນັດ ສີສຸລາດ)**

# ເຝິກອົບຮົມວຽກງານກະກຽມເລືອກຕັ້ງ ແກ່ອະນຸກຳມະການເລືອກຕັ້ງແຂວງໄຊສົມບູນ

(ສພຂ) - ວັນທີ 17-18 ທັນວາ 2025 ຢູ່ທີ່ຫ້ອງປະຊຸມຫ້ອງວ່າການແຂວງ, ສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ໄດ້ຈັດກອງປະຊຸມເຝິກອົບຮົມວຽກງານເລືອກຕັ້ງສະພາສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສພຂ ຊຸດທີ V ແກ່ບັນດາອະນຸກຳມະການເລືອກຕັ້ງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18, ປະທານສະພາປະຊາຊົນແຂວງ; ມີຄະນະກຳມະການເລືອກຕັ້ງຂອງແຂວງ, ອະນຸກຳມະການເລືອກຕັ້ງ ແລະ ຮອງເລຂາພັກເມືອງ 5 ເມືອງເຂົ້າຮ່ວມ.



ກອງປະຊຸມໄດ້ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳ ຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງ; ເອກະສານເພີ່ມທະວີນຳພາແນວຄິດເສີມຂະຫຍາຍປະຊາທິປະໄຕ ຂອງປະຊາຊົນລາວບັນດາເຜົ່າ; ເອກະສານເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະພາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ເອກະສານເຊື່ອມຊຶມແລະການຈັດຕັ້ງປະຕິບັດແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ; ຄຳແນະນຳ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບການແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງຂັ້ນທ້ອງຖິ່ນຢູ່ສະຖານທູດ, ກົງສູນລາວ ແລະ ສຳນັກງານຜູ້ຕາງໜ້າຖາວອນຂອງ ສປປລາວ; ຄຳແນະນຳກ່ຽວກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຄຳແນະນຳກ່ຽວກັບ ລະບຽບການຄຸ້ມຄອງງົບປະມານ ຮັບໃຊ້ແກ່ການເລືອກຕັ້ງ ແລະ ຄຳແນະນຳຂອງຄະນະກຳມະການເລືອກຕັ້ງລະດັບຊາດ ວ່າດ້ວຍການໂຄສະນາ, ປຸກລະດົມຂະບວນການ ແລະ ການຍ້ອງຍໍ; ຈາກນັ້ນ, ໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບທາງດ້ານການເມືອງ, ສຸມທຸກສະຕິປັນຍາເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ເນື້ອໃນບັນດາເອກະສານ.

ທ່ານ ແດງ ປະທຸມທອງ ກ່າວວ່າ: ເພື່ອຜັນຂະຫຍາຍບັນດາມະຕິ, ຂໍ້ຕົກລົງຕ່າງໆ ຂອງຄະນະກຳມະການເລືອກຕັ້ງລະດັບຊາດມາເປັນຂອງແຂວງທັງຮັບປະກັນໃຫ້ການເລືອກຕັ້ງມີຄວາມເປັນເອກະພາບ ມີຜົນສຳເລັດໃນການຈັດຕັ້ງປະຕິບັດໜ້າທີ່ ການເມືອງອັນມີກຽດ ທີ່ໄດ້ຮັບມອບໝາຍ ແລະ ໃຫ້ສອດຄ່ອງກັບກົດໝາຍ ເຊິ່ງບັນດາເນື້ອໃນທີ່ນຳມາເຜີຍແຜ່ເຊື່ອມຊຶມ ລ້ວນແຕ່ເປັນເນື້ອໃນ ທີ່ສຳຄັນພື້ນຖານໃຫ້ແກ່ວຽກງານເລືອກຕັ້ງ; ພ້ອມນັ້ນ, ທ່ານຍັງ

ອ່ານຕໍ່ໜ້າ 12




# ຈັນໃສແຈ້ງ ດວງດຽວບໍ່ມີຄ່ອງ...!

# ດົ້ນກົບເມກ

ບົດນີ້ ຜູ້ຂຽນພະຍາຍາມອະທິບາຍຄືນສຸພາສິດບາງຂໍ້ທີ່ໄດ້ສອນກ່ຽວກັບຄະຕິ ໃນການເປັນຜູ້ນຳ ແລະ ການປົກຄອງ ເຊິ່ງໄດ້ຍົກຫົວຂໍ້ສຸພາສິດໄວ້ຂ້າງເທິງນັ້ນວ່າ: ຈັນໃສແຈ້ງດວງດຽວບໍ່ຄ່ອງ ດາວບໍ່ລ້ອມ ຈັນເຈົ້າບໍ່ເຮືອງ; ສຸພາສິດຂໍ້ນີ້ ຄົມເຂັ້ມ ສັ້ນກະທັດຣັດ ທີ່ສອນໃຫ້ຜູ້ເປັນຫົວໜ້າໝູ່ຕ້ອງໄດ້ຄິດ, ຖ້າປຽບໃສ່ຜູ້ນຳກໍໃຫ້ເຫັນຄວາມສຳຄັນຂອງປະຊາຊົນ ແລະ ບັນດາຜູ້ຊ່ວຍວຽກທີ່ເສຍສະຫຼະປັນຍາ ປະກອບສ້າງໄປໃນຂະບວນການສ້າງຊາດ ເວົ້າສະເພາະກໍແມ່ນບັນດາຄູອາຈານ-ນັກວິຊາການຕ່າງໆ ມີຄວາມຮູ້ແທ້ຈິງ, ທຸ່ມເທໃນໜ້າວຽກຕົວຈິງ.

ບັນພະບຸລຸດລາວເຮົາ ເພິ່ນຍັງປຽບຜູ້ນຳຄືກັບແກ້ວໜ່ວຍປະເສີດ ທີ່ຕ້ອງມີລູກແກ້ວນ້ອຍເປັນບໍລິວານ ແລະ ມີໂລຫະທອງຄຳຮອງຮັບ ຈຶ່ງພາໃຫ້ແກ້ວໜ່ວຍດັ່ງກ່າວ ຢູ່ຄົງທົນຖາວອນ ແລະ ຮຸ່ງໃສເຫຼື້ອມມີສະເໜ່ງາມຕາດູດໃຈ ດັ່ງສຸພາສິດເຕືອນວ່າ: ມະນີໂຊແກ້ວມະຫານິນໜ່ວຍປະເສີດ ບໍ່ມີຄຳຫໍ່ຫຸ້ມມະນີແກ້ວກໍຫລ່າຈາງ...!ຄວາມສຳຄັນຂອງມະຫາຊົນ-ບັນດານັກວິຊາການທີ່ຮູ້ແຈ້ງ ຊ່ວຍສ້າງຊາດ, ບັນດາກຳລັງແຮງຂອງມະຫາຊົນ ຍາມໃດກໍຮອງຮັບເຊີດຊູຍູ້ໜູນໃຫ້ວຽກງານຂອງຊາດສຳເລັດໄດ້ ຖ້າວ່າຜູ້ເປັນຫົວໜ້າໃຫ້ຄວາມສຳຄັນ, ຍ້ອງຍໍເຊີດຊູສົມກຽດຖານະເຂົາເຈົ້າ!.

ຄະຕິສຸພາສິດທີ່ເປັນເຂັມທິດເບື້ອງທາງແກ່ຜູ້ເປັນຫົວໜ້າໃນຄັງສາງວັນນະຄະດີລາວຍັງບີ່ມຊ້ອນທ່າແຮງຫຼວງຫຼາຍເຊັ່ນ: ສຸພາສິດສອນສັ້ນໆວ່າ: ຢາກກິນເຂົ້າໃຫ້ປູກໃສ່ພະລານຫີນ ຢາກມີສິນໃຫ້ນອນດິນເກືອກຝຸ່ນ, ຄົນເຮົາກ່ອນຈະສຳເລັດໄດ້ ຕ້ອງໄດ້ຜ່ານຫຼາຍຂັ້ນຕອນຂອງອຸປະສັກ, ໃຊ້ເວລາຍາວນານສຶກສາບົດຮຽນ ແລະ ທີ່ສຳຄັນແມ່ນຮູບແບບການດຳເນີນຊີວິດຕ້ອງສະເໝີພາບ ຄຽງຄູ່ ຮູ້ຈັກຈິດໃຈຜູ້ຮ່ວມທຸກ-ຮ່ວມສຸກ.

ສັງລວມໄດ້ວ່າ: ຄົນບູຮານສອນເນັ້ນຫົວໜ້າໃຫ້ຮູ້ຈັກປະພຶດໃຫ້ສົມບົດບາດ ເຊິ່ງບໍ່ປະພຶດທຳນອງທີ່ວ່າ ຜູ້ເປັນຊຸນບໍ່ຢຳຣິດບ້ານ, ຖ້າຜູ້ເປັນຫົວໜ້າບໍ່ເປັນແບບຢ່າງກໍຍາກທີ່ຈະສອນໃຫ້ຄົນອື່ນປະຕິບັດຕາມ ເຖິງແມ່ນວ່າເວົ້າດີມີເຫດຜົນກໍຕາມ! ສະເໜີເປັນຂໍ້ຄິດ.

## ຄລຊ...

(ຕໍ່ຈາກໜ້າ 2)

ຕັ້ງເມືອງ, ອະນຸກຳມະການແລະກອງເລຂາຊ່ວຍວຽກຄລມເຂົ້າຮ່ວມ 40 ທ່ານ; ຄະນະທີ 2 ນຳໂດຍທ່ານ ພົຕ. ປອ. ວົງສັກ ພັນທະວົງ ແລະ ທ່ານ ຄຳຟອງ ອິນມານີ ໄດ້ລົງຕິດຕາມ, ຊຸກຍູ້ຢູ່ເມືອງສິງ ເຊິ່ງມີບັນດາທ່ານຄະນະກຳມະການເລືອກຕັ້ງເມືອງ, ອະນຸກຳມະການ ແລະ ກອງເລຂາຊ່ວຍວຽກ ຄລມ ເຂົ້າຮ່ວມ 80 ທ່ານ.

ທ່ານ ທຳມະວົງ ບຸນຖາວອນກຳມະການພັກແຂວງ, ເລຂາພັກເມືອງ, ປະທານຄະນະກຳມະການເລືອກຕັ້ງເມືອງນາແລ ແລະ ທ່ານ ໜານມອນ ແກ້ວສິງໄຊ ກຳມະການພັກແຂວງ, ເລຂາພັກເມືອງ, ປະທານຄະນະກຳມະການເລືອກຕັ້ງເມືອງສິງ ໄດ້ລາຍງານສະພາບລວມຂອງເມືອງ ແລະ ຄວາມຄືບໜ້າໃນການກະກຽມເລືອກຕັ້ງ ໃນບາດກ້າວທີ 1 ແລະ ບາດກ້າວທີ 2 ເຊິ່ງມີຜົນສຳເລັດຫຼາຍດ້ານຕາມແຜນການທີ່ວາງໄວ້; ເຂດເລືອກຕັ້ງເມືອງນາແລມີທັງໝົດ57ບ້ານ ແລະ ກຳນົດເປັນ 42 ໜ່ວຍເລືອກຕັ້ງ, ມີ 84 ຫີບປ່ອນບັດ ໂດຍຄາດຄະເນຜົນລະເມືອງທີ່ມີສິດເລືອກຕັ້ງ (ອາຍຸ 18 ປີຂຶ້ນໄປ) ມີຈຳນວນ 26,196 ຄົນ, ຍິງ 13,146 ຄົນ; ເຂດເລືອກຕັ້ງເມືອງສິງ ມີທັງໝົດ93ບ້ານ ແລະ ກຳນົດເປັນ 68 ໜ່ວຍປ່ອນບັດ ໂດຍຄາດຄະເນພົນລະເມືອງທີ່ມີສິດເລືອກຕັ້ງ ມີຈຳນວນ 31,234 ຄົນ, ຍິງ 16,346 ຄົນ.

ວັນທີ 20 ມັງກອນ, ທ່ານ ເລັດ ໄຊຍະພອນ ແລະ ທ່ານ ພົຕ. ປອ. ວົງສັກ ພັນທະວົງ ພ້ອມດ້ວຍຄະນະ ແລະ ຄະນະກຳມະການເລືອກຕັ້ງແຂວງ ໄດ້ລົງຕິດຕາມ, ຊຸກຍູ້ວຽກງານກະກຽມການເລືອກຕັ້ງຢູ່ເມືອງວຽງພູຄາ ໂດຍມີບັນດາທ່ານຄະນະກຳມະການເລືອກຕັ້ງເມືອງ, ອະນຸກຳມະການ ແລະ ກອງເລຂາຊ່ວຍວຽກ ຄລມ ເຂົ້າຮ່ວມ. ທ່ານ ບຸນຊົງ ວາໄຊຍີ ກຳມະການພັກແຂວງ, ເລຂາພັກເມືອງ, ປະທານຄະນະກຳມະການເລືອກຕັ້ງເມືອງ ໄດ້ລາຍງານສະພາບລວມຂອງເມືອງ ແລະ ຄວາມຄືບໜ້າໃນການກະກຽມເລືອກຕັ້ງ ໃນບາດກ້າວທີ 1 ແລະ ບາດກ້າວທີ2ເຊິ່ງມີຜົນສຳເລັດຫຼາຍດ້ານຕາມແຜນການທີ່ວາງໄວ້; ເຂດເລືອກຕັ້ງເມືອງວຽງພູຄາ ມີທັງໝົດ 46 ບ້ານ ແລະ ກຳນົດເປັນ 49 ໜ່ວຍປ່ອນບັດ ໂດຍຄາດຄະເນພົນລະເມືອງທີ່ມີສິດເລືອກຕັ້ງ ມີຈຳນວນ 15,764 ຄົນ, ຍິງ 7,890 ຄົນ.

ໃນໂອກາດລົງຕິດຕາມ, ຊຸກຍູ້ການເລືອກຕັ້ງຄັ້ງນີ້, ຄະນະກຳມະການເລືອກຕັ້ງລະດັບຊາດ ໄດ້ຮຽກຮ້ອງໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ກໍຄືຄະນະກຳມະການເລືອກຕັ້ງແຕ່ລະເມືອງສືບຕໍ່ເພີ່ມທະວີຄວາມເປັນເຈົ້າການຈັດຕັ້ງປະຕິບັດວຽກງານໃນບາດກ້າວຕໍ່ໄປ ເປັນຕົ້ນ: ເອົາໃຈໃສ່ປະສານສົມທົບລະຫວ່າງຂັ້ນເມືອງກັບຂັ້ນແຂວງ ໃຫ້ມີຄວາມກົມກຽວຂຶ້ນຕື່ມ ເພື່ອຈັດຕັ້ງປະຕິບັດວຽກງານໃນບາດກ້າວທີ3ໃຫ້ສຳເລັດ100%; ວຽກງານໂຄສະນາ ແລະ ປຸກລະດົມ ໃຫ້ສ້າງຂະບວນການ ໃຫ້ມີຄວາມຟົດຟື້ນກວ້າງຂວາງທົ່ວສັງຄົມ ເພື່ອຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງ ໄດ້ໄປໃຊ້ສິດປ່ອນບັດຄົບຕາມຈຳນວນ, ມີຄວາມຖືກຕ້ອງຕາມກົດໝາຍ, ຂັ້ນຕອນ ແລະ ວິທີການທີ່ກຳນົດ; ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ; ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນທົ່ວສັງຄົມໃຫ້ມີຄວາມປອດໄພຮ້ອຍສ່ວນຮ້ອຍ ລວມທັງການກະກຽມສະຖານທີ່ປ່ອນບັດ, ການເກັບກຳຈຳນວນສະຖິຕິຜູ້ມີສິດປ່ອນບັດ ແລະ ກຳນົດການປ່ອນບັດຂອງສອງກຳລັງ, ດ້ານການຄຸ້ມຄອງ-ນຳໃຊ້ງົບປະມານ ແລະ ວຽກງານອື່ນປິ່ນອ້ອມ.



## ຄລຊ...

(ຕໍ່ຈາກໜ້າ 1)

ຍູ້ວຽກງານກະກຽມຄວາມພ້ອມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 16 ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ(ສສຂ)ຊຸດທີVຢູ່ແຂວງເຊກອງ ໂດຍການຕ້ອນຮັບຢ່າງອົບອຸ່ນຈາກທ່ານ ດົງເຜັດ ພະຍົນ ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງແຂວງ(ຄລຂ) ພ້ອມດ້ວຍຄະນະກຳມະການເລືອກຕັ້ງຂັ້ນແຂວງ-ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ. ທ່ານ ດົງເຜັດ ພະຍົນ ໄດ້ຕາງໜ້າຄລຂລາຍງານສະພາບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ເຊິ່ງແຂວງເຊກອງໄດ້ດຳເນີນການຕາມ 4 ບາດກ້າວທີ່ວາງໄວ້, ປັດຈຸບັນແມ່ນສຳເລັດບາດກ້າວທີ 1 ແລະ 2 ຢ່າງມີຜົນສຳເລັດທີ່ດີ, ພົ້ນເດັ່ນແມ່ນດ້ານບຸກຄະລາກອນ ແລະ ນິຕິກຳ: ສຳເລັດການແຕ່ງຕັ້ງຄະນະກຳມະການເລືອກຕັ້ງທຸກຂັ້ນ, ສ້າງນິຕິກຳບ່ອນອີງ ແລະ ສຳເລັດການທາບທາມບຸກຄະລາກອນຜູ້ສະໝັກຮັບເລືອກຕັ້ງທັງ ສສຊ ແລະ ສສຂ; ດ້ານສະຖິຕິຜູ້ມີສິດປ່ອນບັດ: ທົ່ວແຂວງມີຜູ້ມີສິດປ່ອນບັດທັງໝົດ76,910ຄົນ, ຍິງ38,311ຄົນ(ເພີ່ມຂຶ້ນຈາກປີ2021ຈຳນວນ7,126ຄົນ); ດ້ານເຕັກນິກ: ກຳນົດຈຸດປ່ອນບັດໄດ້ 106 ໜ່ວຍ (ເພີ່ມຂຶ້ນ 8 ໜ່ວຍ) ໃນນີ້, ລວມມີໜ່ວຍປ່ອນບັດຂອງກຳລັງປະກອບອາວຸດ 2 ໜ່ວຍ; ດ້ານງົບປະມານ: ໄດ້ແຈກຢາຍງົບປະມານຈຳນວນ 445 ລ້ານກີບ ໃຫ້ແກ່ 4 ເມືອງ (ລະມາມ, ທ່າແຕງ, ດາກຈຶງ ແລະກະລຶມ)ເພື່ອນຳໃຊ້ເຂົ້າໃນວຽກງານກະກຽມເບື້ອງຕົ້ນ. ສຳລັບທິດທາງໃນຕໍ່ໜ້າ, ຄະນະກຳມະການເລືອກຕັ້ງຂັ້ນແຂວງຈະສຸມໃສ່ບາດກ້າວທີ 3 ເປັນຕົ້ນແມ່ນການຜະລິດອຸປະກອນເຕັກນິກ, ຈັດພິມຮູບພາບ-ປະຫວັດຜູ້ສະໝັກ, ໃບຢັ້ງຢືນ ແລະ ບັດລົງຄະແນນສຽງ ເພື່ອແຈກຢາຍໃຫ້ບັນດາໜ່ວຍປ່ອນບັດໃຫ້ທັນຕາມກຳນົດເວລາ.

ໃນໂອກາດການເຄື່ອນໄຫວຄັ້ງນີ້, ທ່ານ ສົມມາດ ພົລເສນາ ພ້ອມດ້ວຍຄະນະ ຍັງໄດ້ລົງຕິດຕາມກວດກາສະພາບຕົວຈິງຢູ່ໜ່ວຍປ່ອນບັດເລືອກຕັ້ງທີ 1 ບ້ານເພຍໃໝ່ ເມືອງລະມາມ ແລະ ໜ່ວຍປ່ອນບັດບ້ານຫ້ວຍຊາຍ ເມືອງທ່າແຕງ, ຜ່ານການລົງຊຸກຍູ້ ແລະ ຮັບຟັງການລາຍງານຂອງຄະນະຮັບຜິດຊອບປະຈຳໜ່ວຍປ່ອນບັດດັ່ງກ່າວ ເຫັນວ່າແຕ່ລະບ່ອນແມ່ນມີຄວາມຕື່ນຕົວ ແລະ ມີຄວາມກຽມພ້ອມຮອບດ້ານໃນເບື້ອງຕົ້ນ ເພື່ອຮອງຮັບໃຫ້ແກ່ວັນປ່ອນບັດຕົວຈິງ.

ທ່ານສົມມາດພົລເສນາ ໄດ້ໂອ້ລົມ ແລະ ໃຫ້ຊີ້ນຳຕໍ່ຄະນະກຳມະການເລືອກຕັ້ງທຸກຂັ້ນ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມເອົາໃຈໃສ່ ແລະ ຜົນສຳເລັດທີ່ຍາດມາໄດ້ ພ້ອມທັງເນັ້ນໜັກໃຫ້ຄະນະຮັບຜິດຊອບ ສືບຕໍ່ຕິດຕາມກວດກາບັນດາໜ້າວຽກຢ່າງໃກ້ຊິດ ໂດຍສະເພາະແມ່ນການເກັບກຳຂໍ້ມູນສະຖິຕິໃຫ້ລະອຽດຈະແຈ້ງ, ການຮັບປະກັນຄວາມສະຫງົບຮອບດ້ານໃນວັນປ່ອນບັດແລະການໂຄສະນາປຸກລະດົມປະຊາຊົນໄປໃຊ້ສິດເລືອກຕັ້ງ ໃຫ້ບັນລຸຄາດໝາຍ 100% (4 ຄາດໝາຍ); ທ່ານຍັງໄດ້ຮຽກຮ້ອງໃຫ້ຜູ້ມີສິດປ່ອນບັດທີ່ມີອາຍຸແຕ່ 18 ປີຂຶ້ນໄປ ຈົ່ງພ້ອມກັນໄປໃຊ້ສິດປະຊາທິປະໄຕຂອງຕົນໃນວັນທີ 22 ກຸມພາທີ່ຈະມາເຖິງນີ້ ເພື່ອເລືອກເອົາຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ.

ວັນທີ 20 ມັງກອນ, ທ່ານ ສົມມາດ ພົລເສນາ ພ້ອມດ້ວຍຄະນະ ໄດ້ສືບຕໍ່ລົງເຄື່ອນໄຫວຕິດຕາມ ແລະ ຊຸກຍູ້ວຽກງານກະກຽມຄວາມພ້ອມໃຫ້ແກ່ການເລືອກຕັ້ງ ສສຊ ປະຈຳເຂດເລືອກຕັ້ງທີ 14 ຊຸດທີ X ແລະ ສສຂ ຊຸດທີ V ຢູ່ແຂວງສາລະວັນ ເຊິ່ງໄດ້ພົບປະກັບທ່ານ ດາວວົງ ພອນແກ້ວ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານຄະນະກຳມະການເລືອກຕັ້ງແຂວງ ເພື່ອລາຍງານຈຸດປະສົງ ແລະ ປຶກສາຫາລືທິດທາງໃນການຊຸກຍູ້ບັ້ນເລືອກຕັ້ງ; ທ່ານ ດາວວົງ ພອນແກ້ວ ກໍໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງສະແດງຄວາມຂອບໃຈແລະຢືນຢັນຈະສືບຕໍ່ນຳພາ-ຊີ້ນຳຄະນະກຳມະການເລືອກຕັ້ງທຸກຂັ້ນ ໃຫ້ເອົາໃຈໃສ່ປະຕິບັດໜ້າທີ່ຢ່າງສຸດກຳລັງ ເພື່ອເຮັດໃຫ້ການເລືອກຕັ້ງຄັ້ງນີ້ ດຳເນີນໄປດ້ວຍຜົນສຳເລັດອັນຈົບງາມ.

ຫຼັງຈາກນັ້ນ, ໄດ້ມີກອງປະຊຸມຮ່ວມກັບຄະນະກຳມະການເລືອກຕັ້ງຂັ້ນແຂວງ ໂດຍການຕ້ອນຮັບຂອງທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງ, ຮອງປະທານ ຄລຂ ເຊິ່ງມີບັນດາຄະນະກຳມະການເລືອກຕັ້ງຂັ້ນແຂວງ-ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ. ໃນກອງປະຊຸມ, ທ່ານ ສີເຮັງ ຫອມສົມບັດ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດວຽກງານຮອດບາດກ້າວທີ 2ເຊິ່ງມີຜົນສຳເລັດທີ່ພົ້ນເດັ່ນຄື: ດ້ານການເຜີຍແຜ່ ແລະ ບຸກຄະລາກອນ: ສຳເລັດການເຊື່ອມຊຶມມະຕິກົມການເມືອງສູນກາງພັກ ແລະ ເອກະສານການເລືອກຕັ້ງ ໃຫ້ພະນັກງານຫຼັກແຫຼ່ງທົ່ວແຂວງ ໄດ້ 2,124 ເທື່ອຄົນ; ດ້ານສະຖິຕິ ແລະ ເຕັກນິກ: ໄດ້ກຳນົດໜ່ວຍປ່ອນບັດທົ່ວແຂວງ 361 ໜ່ວຍ ໃນ 8 ເມືອງ, ສຳລັບການເກັບກຳຜູ້ມີສິດປ່ອນບັດແມ່ນສຳເລັດແລ້ວ5ເມືອງແລະອີກ3ເມືອງ(ເລົ່າງາມ, ລະຄອນເພັງ ແລະ ຕຸ້ມລານ) ແມ່ນພວມສືບຕໍ່ດຳເນີນການຢ່າງຮີບຮ້ອນ; ດ້ານການປ້ອງກັນຄວາມສະຫງົບ: ສຳເລັດການວາງແຜນດຳເນີນງານຂອງອະນຸກຳມະການ ປກຊ-ປກສ ເພື່ອຮັບປະກັນຄວາມປອດໄພ 100%.

ໃນຕອນທ້າຍ, ທ່ານ ສົມມາດ ພົລເສນາ ໄດ້ກ່າວໂອ້ລົມ ແລະ ຊີ້ນຳໃຫ້ຄະນະຮັບຜິດຊອບທຸກຂັ້ນ ສືບຕໍ່ຕິດຕາມກວດກາໜ້າວຽກຢ່າງໃກ້ຊິດ ໂດຍສະເພາະແມ່ນການເກັບກຳຂໍ້ມູນໃຫ້ລະອຽດຊັດເຈນ ແລະ ປຸກລະດົມໃຫ້ປະຊາຊົນໄປໃຊ້ສິດເລືອກຕັ້ງໃນວັນທີ 22 ກຸມພາ 2026 ໃຫ້ບັນລຸຕາມ 4 ຄາດໝາຍໃຫຍ່ທີ່ວາງໄວ້.



ສຸກສະບາຍຫາຍໂຣຄ

# ອາຫານຂອງແຕ່ລະກຸ່ມເລືອດ ທີ່ຄວນກິນ ແລະ ຄວນຫຼີກລ່ຽງ

# ຮຽບຮຽງໂດຍ: ດອກຄາຍ




**ກຸ່ມເລືອດ AB:** ແມ່ນອາຫານທະເລ, ເນີຍ, ນົມ, ຜະລິດຕະພັນຈາກຖົ່ວເຫລືອງ, ຜັກ ແລະ ໄຂ່. ແຕ່ຄວນຫຼີກລ່ຽງປາຊີ້ນຂາວ, ຊີ້ນສັດໃຫຍ່, ໝາກສີດາ, ສາລີ, ໝາກມ່ວງ, ຖົ່ວແດງ ເພາະພູມຄຸ້ມກັນບໍ່ແຂງແຮງ ກົດໃນກະເພາະໜ້ອຍຍ່ອຍອາຫານປະເພດຊີ້ນສັດໄດ້ຍາກ.

**ກຸ່ມເລືອດ A:** ແມ່ນປະເພດຜັກ, ປາ, ນົມຖົ່ວເຫຼືອງ. ແຕ່ຄວນຫຼີກລ່ຽງ ໄຂ່, ນົມງົວ, ແປ້ງ, ຊີ້ນສັດ ເພາະລະບົບຍ່ອຍອາຫານ, ລະບົບພູມຄຸ້ມກັນບໍ່ດີ, ສ່ຽງເປັນພະຍາດຫົວໃຈ ແລະ ມະເຮັງ.

**ກຸ່ມເລືອດ B:** ແມ່ນຄວນເລືອກກິນເຂົ້າກ້ອງ, ເຂົ້າໂອດ, ຂີງ, ຊາຂຽວ, ໂສມ. ອາຫານທີ່ຄວນຫຼີກລ່ຽງແມ່ນ ປູ, ກຸ້ງ, ຫອຍແຄງ, ຊີ້ນໄກ່ ແລະ ແປ້ງ ເພາະກົດໃນກະເພາະອາຫານຫລາຍ, ລະບົບເຜົາຜານບໍ່ດີແລະເລືອດແຂງໂຕຊ້າ.

**ກຸ່ມເລືອດ O:** ແມ່ນປະເພດ ຊີ້ນສັດ, ອາຫານທະເລ, ຜັກຫົມ. ແຕ່ຄວນຫຼີກລ່ຽງ ໝາກໄມ້ລົດສົ້ມ, ຊາ, ກາເຟ, ເບຍ ເພາະກົດໃນກະເພາະຫຼາຍ ລະບົບເຜົາກໍບໍ່ດີປານໃດ ເລືອດກໍແຂງຕົວຊ້າຕື່ມອີກ.

ແນວໃດກໍຕາມອາຫານທີ່ເວົ້າມານັ້ນ ກໍບໍ່ໄດ້ໝາຍຄວາມວ່າ ສິ່ງທີ່ຄວນຫຼີກລ່ຽງນັ້ນກຸບເລືອດນັ້ນຈະກິນບໍ່ໄດ້ ແຕ່ວ່າຖ້າຫຼີກລ່ຽງໄດ້ແມ່ນຈະດີຕໍ່ສຸຂະພາບ ແຕ່ຖ້າຫຼີກລ່ຽງບໍ່ໄດ້ ກໍຄວນກິນເລັກໜ້ອຍເທົ່ານັ້ນ ເພື່ອໃຫ້ຮ່າງກາຍຂອງເຮົາມີສຸຂະພາບທີ່ດີ.

**ຂໍ້ມູນຈາກ:**
**www.laopost.com**







ອາດ ກະວີລາວ

# ກຽມໃຈໄປເລືອກຕັ້ງ

# ສໍ ພູທອນ

❊ 5 ປີເລີຍລ່ວງໄດ້
ສະໄໝໃໝ່ວຽນມາ
ກຽມຈິດໃຈໝາຍໝັ້ນ
ທຸກຄົນມີສິດເລືອກໄດ້
ສະໄໝໜຶ່ງລາກາຍ
ເຫຼົ່າປະຊາກຽມໄວ້
ພິຈາລະນາຖ້ວນຖີ່
ຕາງໜ້າສູ່ສະພາ ພີ່ນ້ອງເອີຍ!

❊ ມີປະກາດກຳນົດແຈ້ງ
ທີ 22 ກຸມພາ
ຄວນກະກຽມແຜນໄວ້
ທ່ອງຈຳສິດທີ່ໄດ້
ບອກກ່າວເປັນທາງການ
ແມ່ນວັນເລືອກຕັ້ງ
ໄປ-ມາໃຫ້ຫວນຮ່ຳ
ຢ່າໄລຖິ້ມປ່ອຍໄປ

❊ ເລືອກເອົາຄົນຮອບຮູ້
ກຳແໜ້ນແນວທາງພັກ
ຈິດໃຈອາລີອ້ອມ
ຜົນປະໂຫຍດລວມເປັນບ່ອນຕັ້ງ
ທາງສາດວິຊາການ
ທ່ຽງທຳມີສວຍໃຊ້
ປະຊາຊົນມາກ່ອນ
ປະຊາເຊື້ອເປັນບ່ອນເອົາ ຊອບແລ້ວ!

❊ ການເລືອກຕັ້ງເທື່ອນີ້
ຕ້ອງຕັ້ງໃຈຕິດຕາມຟັງ
ວິທີການບັນຍາຍແຈ້ງ
ຮັບປະກັນຮ້ອຍສ່ວນຮ້ອຍ
ມັນຕ່າງຄາວຫຼັງ ແທ້ໃດ
ເພິ່ນນຳພາຊີ້
ມີບັນຫາໃຫ້ເພິ່ນຊ່ອຍ
ບັດຕາຍນັ້ນຢ່າໃຫ້ມີ

❊ ຄວາມສະຫງົບຮຽບຮ້ອຍ
ໃຫ້ດຳເນີນໄປ
ຕາມລະບຽບການແຈ້ງ
ຕາມຄາດການເພິ່ນເວົ້າ
ຄອຍລ່ຳແລມອງ ນຳກັນເນີ!
ລຸລ່ວງດີໂດຍດ້ານ
ສະແດງສິດຂອງທ່ານ
ຜົນໃຫ້ລື່ນຄາດໝາຍ ນັ້ນທ້ອນ!

❊ ຂໍອວຍພອນສິ່ງໃຫ້
ປະສົບຜົນມີໄຊ
ໄດ້ຜູ້ມີຄວາມຮູ້
ປົກປ້ອງຜົນປະໂຫຍດໃຫ້
ວັນເລືອກຕັ້ງຊິມາເຖິງ
ດັ່ງໝາຍວາງໄວ້
ປະຊາຊົນຫວັງເພິ່ງ
ເມືອງບ້ານຮຸ່ງຈະເລີນ ນັ້ນເນີ!



ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❊ **ຊົມ**ເຊີຍວັນສ້າງຕັ້ງກອງທັບປະຊາຊົນລາວ (20 ມັງກອນ 1949-20 ມັງກອນ 2026) ທີ່ໄດ້ໝູນວຽນມາບັນຈົບ ຄົບຮອບ **75 ປີ** ຂໍໃຫ້ມີຄວາມສຸກ ເຫຼົ່າທະຫານຄົນກ້າ ໜ້າທີ່ການງານກ້າວ ດາວປະດັບເຕັມບ່າ ລາບຍົດສູງສຽດຟ້າ ພັດທະນາກ້າວຢ່າເສື່ອມຖອຍ ໃຫ້ໄດ້ເປັນນາຍຮ້ອຍ ນາຍພັນຊັ້ນເລື່ອນ ເປັນນາຍພົນກຽດກ້ອງ ປະຊາຍ້ອງຊື່ນຊົມ **ທ່ານເອີຍ!**

❊ **ເລີ່ມ**ຕົ້ນເຂົ້າສູ່ຊ່ວງອາທິດສຸດທ້າຍຂອງເດືອນມັງກອນ ເຊິ່ງເປັນໄລຍະການຈັດຕັ້ງປະຕິບັດອັດຕາໂຄງສ້າງເງິນເດືອນ ໃຫ້ພະນັກງານ-ລັດຖະກອນ ທັງກຳລັງທະຫານຕຳຫຼວດພ້ອມ ນາຍຄູ, ຜູ້ບຳນານ ແລະ ເສຍອົງຄະ ຂອງລັດຖະບານເພື່ອໃຫ້ເໝາະສົມກັບເສດຖະກິດ-ສັງຄົມ ເພື່ອຢູ່ຍັງຄົງໄດ້ ມີທັງແລ້ງການໃຫ້ ຄ່ານະບ່າວິທີຄິດໄລ່ໃຜໄດ້ເທົ່າໃດຄືຊິຮູ້ ຄົງທ້ອແຍ້ມມ່ວນໃຈ **ແລນ໋!** ແຕ່ຄັນໃຫ້ດີຄັກແທ້ ປັບລົງແດ່ບາງອັນ ຢ່າປ່ອຍມັນສູງເກີນກວ່າກາຍລາຍໄດ້ ຮຽນຂໍເປັນຕົວແທນໃຫ້ ລັດຖະກອນທຸກໆທ່ານ ຂໍຂອບໃຈລັດຖະບານທີ່ຊ່ອຍແກ້ ຄ່າແຮງໃຫ້ຄອງຕົວ **ທ່ານເອີຍ!**

🤗 ຊອບຍິ້ມ 🤗

# ພົ້ງລື່ງ

## ເລື່ອງ: ມືໃຜ

ມີຍິງສາວຄົນໜຶ່ງ ເຂົ້າໄປຫາຕຳຫຼວດ, ບອກວ່າໂຕເອງຖືກຂົ່ມຂືນກະທ່າສ່ຳເລົ້າ

**ຕຳຫຼວດ:** ລອງເລົ່າມາເບິ່ງດູ ມັນເປັນຈັ່ງໃດ

**ຍິງສາວ:** ເອີ... ມືໜຶ່ງມັນລັອກຄໍຂ້ອຍໄວ້, ອີກມືໜຶ່ງມັນຈັບມືຂ້ອຍລັອກໄວ້, ແລ້ວມັນກໍຖົກສິ້ນຂ້ອຍຂຶ້ນ

**ຕຳຫຼວດ:** ລອງເລົ່າລະອຽດຄັກແນ່ດູ ມັນຈັ່ງໃດແທ້?

**ຍິງສາວ:** ມືຊ້າຍມັນລັອກຄໍ ມືຂວາມັນລັອກມື

**ຕຳຫຼວດ:** ແລ້ວມືໃດຖົກສິ້ນ???

**ຍິງສາວ:** ມືຂະນ້ອຍເອງ!!!???



### ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ສິ່ງໃດທີ່ເຮົາຄວບຄຸມບໍ່ໄດ້
ສິ່ງນັ້ນກຳລັງສອນໃຫ້ເຮົາຮູ້ຈັກປ່ອຍວາງ

ລັດຖະສະພາຕ່າງປະເທດ

# ຮັງກາລີ ກຳນົດວັນທີ 12 ເມສາ ເປັນວັນເລືອກຕັ້ງສະພາແຫ່ງຊາດ

(Xinhua) - ວັນທີ 13 ມັງກອນຜ່ານມາ, ປະທານາທິບໍດີ ທາມາສ ຊູລຢ໊ອກ (Tamas Sulyok) ແຫ່ງຮັງກາລີປະກາດວ່າ ວັນທີ 12 ເມສາ ຈະເປັນວັນເລືອກຕັ້ງສະພາແຫ່ງຊາດຄັ້ງຕໍ່ໄປຂອງປະເທດ; ໃນຖະແຫຼງການທີ່ໂພສໃນສື່ສັງຄົມອອນລາຍ, ຊູລຢ໊ອກ ກ່າວວ່າ ສິດໃນການເລືອກຕັ້ງທີ່ເສລີ ແມ່ນໜຶ່ງໃນເສົາຄ້ຳພື້ນຖານຂອງປະຊາທິປະໄຕ ແລະ ສົ່ງເສີມໃຫ້ພົນລະເມືອງເຂົ້າຮ່ວມໃນການເລືອກຕັ້ງ.

ພາຍໃຕ້ກົດໝາຍຂອງຮັງກາລີ, ການເລືອກຕັ້ງສະພາແຫ່ງຊາດ ຕ້ອງຈັດຂຶ້ນໃນວັນອາທິດເດືອນເມສາ ຫຼື ພຶດສະພາ ແລະ ຕ້ອງບໍ່ກົງກັບວັນພັກລັດຖະການ ຫຼື ວັນອີສເຕີ (Easter - ວັນສະເຫຼີມສະຫຼອງການຟື້ນຄືນຊີວິດຂອງ ພຣະເຢຊູຄຣິສ) ຫຼືວັນເພນເຕຄອສຕ໌ (Pentecost - ເທດສະການສະເຫຼີມສະຫຼອງຂອງຊາວຄຣິສຕຽນ).

ການເລືອກຕັ້ງຄັ້ງນີ້ ເກີດຂຶ້ນໃນທ່າມກາງພູມສັນຖານທາງການເມືອງທີ່ຜັນແປເມື່ອທຽບກັບການເລືອກຕັ້ງກ່ອນໆ, ໂດຍຜົນສຳຫຼວດຄວາມຄິດເຫັນຄັ້ງຫຼ້າສຸດຊີ້ໃຫ້ເຫັນວ່າ ພັກລັດຖະບານ ແລະ ພັກຝ່າຍຄ້ານ ໄດ້ຮັບການສະໜັບສະໜູນທີ່ໃກ້ຄຽງກັນ.

ນາຍົກລັດຖະມົນຕີວິກເຕີ ອໍບານ (Viktor Orban) ຜູ້ນຳໜ້າບັນຊີລາຍຊື່ຜູ້ສະໝັກຂອງພັກ Fidesz ເຊິ່ງເປັນພັກລັດຖະບານໄດ້ກ່າວໃນກອງປະຊຸມໃຫຍ່ຂອງພັກເມື່ອວັນເສົາທີ 10 ມັງກອນວ່າ ເຂົາພ້ອມທີ່ຈະກັບມາເປັນຫົວໜ້າລັດຖະບານອີກຄັ້ງ. ອໍບານ ດຳລົງຕຳແໜ່ງນີ້ຢ່າງຕໍ່ເນື່ອງນັບຕັ້ງແຕ່ປີ 2010ແລະເຄີຍດຳລົງຕຳແໜ່ງນາຍົກລັດ ຖະມົນຕີມາກ່ອນແລ້ວ ຕັ້ງແຕ່ປີ 1998-2002.



# ຜູ້ສະໝັກເກືອບ 3,500 ຄົນ ຈະລົງແຂ່ງຂັນເລືອກຕັ້ງສະພາຕໍ່າເນປານ




(Xinhua) - ເຈົ້າໜ້າທີ່ໄດ້ເປີດເຜີຍໃນຕອນແລງວັນອັງຄານທີ 20 ມັງກອນຜ່ານມາວ່າ ມີຜູ້ສະໝັກຫຼາຍເຖິງ 3,484 ຄົນ ຈາກພັກການເມືອງຕ່າງໆ ແລະ ຜູ້ສະໝັກເອກະລາດ ໄດ້ຍື່ນໃບສະໝັກພາຍໃຕ້ລະບົບຜູ້ທີ່ໄດ້ຄະແນນສູງຫຼາຍທີ່ສຸດເປັນຜູ້ຊະນະ (first-past-the-post - FPTP) ສຳລັບການເລືອກຕັ້ງສະມາຊິກສະພາຜູ້ແທນປະຊາຊົນໃນເນປານ ທີ່ຈະຈັດຂຶ້ນໃນວັນທີ 5 ມີນານີ້.

ໃນຈຳນວນທັງໝົດ 2,297 ຄົນ ແມ່ນມາຈາກ 68 ພັກການເມືອງ, ຂະນະທີ່ອີກ 1,187 ຄົນ ຍື່ນໃບສະໝັກໃນຖານະຜູ້ສະໝັກເອກະລາດ. "ຈຳນວນອາດຈະປ່ຽນແປງເລັກນ້ອຍຫຼັງຈາກການກວດສອບຂັ້ນສຸດທ້າຍ" ກຸລ ບາຮາດູຣ໌ ຈີຊີ (Kul Bahadur GC) ຜູ້ຊ່ວຍໂຄສົກຂອງຄະນະກຳມະການເລືອກຕັ້ງ ກ່າວກັບຊິນຮວາ.

ໃນຈຳນວນ 275 ທີ່ນັ່ງໃນສະພາຜູ້ແທນປະຊາຊົນ, 165 ທີ່ນັ່ງ ຈະຖືກເລືອກຕັ້ງໂດຍກົງເຊິ່ງເອີ້ນກັນວ່າລະບົບສຽງສ່ວນຫຼາຍ (FPTP), ສ່ວນອີກ 110 ທີ່ນັ່ງ ຈະຖືກເລືອກຕັ້ງພາຍໃຕ້ລະບົບການເລືອກຕັ້ງແບບສັດສ່ວນ (proportional representation - PR) ຕາມສ່ວນແບ່ງຄະແນນສຽງທີ່ແຕ່ລະພັກການເມືອງໄດ້ຮັບ.

ໂດຍປະຕິບັດຕາມຄຳແນະນຳຂອງລັດຖະບານຮັກສາການທີ່ສ້າງຕັ້ງຂຶ້ນຫຼັງຈາກການເຄື່ອນໄຫວຂອງກຸ່ມຄົນ Gen Z ທີ່ຮຸນແຮງ, ປະທານາທິບໍດີຣາມ ຈັນທຣາ ເປົາເດລ (Ram Chandra Poudel) ໄດ້ຍຸບສະພາຜູ້ແທນແທນປະຊາຊົນເມື່ອເດືອນກັນຍາ 2025 ແລະ ປະກາດຈັດການເລືອກຕັ້ງກາງສະໄໝໃນວັນທີ 5 ມີນາ 2026.

# New Zealand ຈະຈັດການເລືອກຕັ້ງທົ່ວໄປ ໃນວັນທີ 7 ພະຈິກ 2026




(Xinhua) - ນາຍົກລັດຖະມົນຕີ ຄຣິສໂຕເຟີ ລັກຊອນ (Christopher Luxon) ແຫ່ງນູແວນເຊລັງ ຫຼື ນິວຊີແລນ ໄດ້ປະກາດເມື່ອວັນພຸດທີ 21 ມັງກອນຜ່ານມາວ່າການເລືອກຕັ້ງທົ່ວໄປຂອງປະເທດ ຈະຈັດຂຶ້ນໃນວັນທີ 7 ພະຈິກ 2026, ລັກຊອນ ກ່າວວ່າ ການກຳນົດວັນເລືອກຕັ້ງລ່ວງໜ້າ ຈະເຮັດໃຫ້ຊາວນູແວນເຊລັງ "ໝັ້ນໃຈ" ຫຼາຍຂຶ້ນ ແລະ ຢືນຢັນວ່າ ລັດຖະບານທີ່ນຳພາໂດຍພັກແຫ່ງຊາດ ຈະຍັງຄົງສຸມໃສ່ "ການແກ້ໄຂບັນຫາພື້ນຖານແລະສ້າງອະນາຄົດ" ກ່ອນການເລືອກຕັ້ງ.

ນາຍົກລັດຖະມົນຕີໄດ້ແຈ້ງໃຫ້ຜູ້ວ່າການລັດຊາບກ່ຽວກັບວັນເລືອກຕັ້ງແລ້ວ.

# ຜູ້ສະໝັກເກືອບ 2,000 ຄົນ ຈະເຂົ້າຮ່ວມການເລືອກຕັ້ງທົ່ວໄປຂອງບັງກລາເທດ



(Xinhua) - ຄະນະກຳມະການເລືອກຕັ້ງຂອງບັງກລາເທດກ່າວວ່າ ມີຜູ້ສະໝັກເກືອບ 2,000 ຄົນ ຈະລົງແຂ່ງຂັນໃນການເລືອກຕັ້ງທົ່ວໄປຄັ້ງທີ 13 ທີ່ຈະຈັດຂຶ້ນໃນເດືອນກຸມພານີ້; ຄະນະກຳມະການໄດ້ເປີດເຜີຍຕົວເລກຫຼ້າສຸດໃນຕອນຄ່ຳວັນທີ 21 ມັງກອນຜ່ານມາ ຫຼັງຈາກສຳເລັດຂະບວນການຍື່ນໃບສະໝັກ, ການກວດສອບ, ການອຸທອນ, ການຖອນຕົວແລະການສະຫຼຸບລາຍຊື່ຜູ້ສະໝັກຮັບເລືອກຕັ້ງຂັ້ນສຸດທ້າຍ.

ຫຼັງຈາກເສັ້ນຕາຍການຖອນຕົວສຸດທ້າຍໃນວັນອັງຄານ, ເຈົ້າໜ້າທີ່ຢືນຢັນວ່າ ຂະນະນີ້ມີຜູ້ສະໝັກ 1,967 ຄົນ ຈະລົງແຂ່ງຂັນໃນ 298 ຈາກທັງໝົດ 300ເຂດເລືອກຕັ້ງທົ່ວປະເທດ; ຄາດວ່າ ຈຳນວນຜູ້ສະໝັກຈະເພີ່ມຂຶ້ນອີກ ເມື່ອລາຍຊື່ຜູ້ສະໝັກຈາກສອງເຂດເລືອກຕັ້ງທີ່ເຫຼືອ ໄດ້ຮັບການສະຫຼຸບຂັ້ນສຸດທ້າຍ, ກຳນົດເສັ້ນຕາຍສຳລັບການຖອນຕົວໃນເຂດເລືອກຕັ້ງເຫຼົ່ານັ້ນ ໄດ້ຖືກຂະຫຍາຍອອກໄປຈົນຮອດວັນທີ 26 ມັງກອນ ເນື່ອງຈາກຂໍ້ຂັດແຍ້ງທາງກົດໝາຍກ່ຽວກັບການແບ່ງເຂດເລືອກຕັ້ງ.

ເອກະສານສະເໜີຊື່ຜູ້ສະໝັກປະມານ 3,000 ສະບັບ ໄດ້ຖືກເກັບກຳມາຈາກເຈົ້າໜ້າທີ່ຜູ້ຮັບຜິດຊອບການເລືອກຕັ້ງ 69 ຄົນ ເພື່ອລົງແຂ່ງຂັນໃນການເລືອກຕັ້ງທີ່ຈະຈັດຂຶ້ນໃນວັນທີ 12 ກຸມພານີ້.

# ລັດຖະສະພາອົດສະຕຣາລີ ຜ່ານຮ່າງກົດໝາຍຄວບຄຸມປືນ ແລະ ອາຊະຍາກຳຈາກຄວາມຊັງ ທີ່ເຂັ້ມງວດຂຶ້ນ



(Xinhua) - ວັນທີ 20 ມັງກອນຜ່ານມາ, ລັດຖະສະພາອົດສະຕຣາລີ ໄດ້ຜ່ານຮ່າງກົດໝາຍການຄວບຄຸມອາ ວຸດປືນ ແລະ ກົດໝາຍອາຊະຍາກຳຈາກຄວາມຊັງ ທີ່ເຂັ້ມງວດຂຶ້ນ ເພື່ອຕອບສະໜອງຕໍ່ເຫດການຍິງກັນທີ່ຫາດບອນໄດ (Bondi) ເມື່ອເດືອນທັນວາ 2025 ລະຫວ່າງງານບຸນຊາວຢິວ.

ຮ່າງກົດໝາຍການຄວບຄຸມອາວຸດປືນ ເຊິ່ງຈັດຕັ້ງໂຄງການຮັບຊື້ຄືນອາວຸດປືນລະດັບຊາດແລະເພີ່ມຄວາມເຂັ້ມງວດໃນການຄວບຄຸມການນຳເຂົ້າ ໄດ້ຮັບການອະນຸມັດຈາກທັງສອງສະພາ ໂດຍໄດ້ຮັບການສະໜັບສະໜູນຈາກພັກຂຽວ; ກົດໝາຍສະບັບນີ້ ຈະເພີ່ມຄວາມເຂັ້ມງວດໃນການກວດສອບປະຫວັດສຳລັບຜູ້ຖືໃບອະນຸຍາດອາວຸດປືນແລະຜູ້ສະໝັກ, ປັບປຸງການແບ່ງປັນຂໍ້ມູນລະຫວ່າງອົງການຄວາມໝັ້ນຄົງ, ຈຳກັດການນຳເຂົ້າອາວຸດປືນສະເພາະພົນລະເມືອງອົດສະຕຣາລີເທົ່ານັ້ນແລະກຳນົດຂໍ້ຈຳກັດທີ່ເຂັ້ມງວດຂຶ້ນກ່ຽວກັບປະເພດອາວຸດປືນທີ່ສາມາດນຳເຂົ້າໄດ້.

ນາຍົກລັດຖະມົນຕີແອນໂທນີ ອັລບາເນເຊ (Anthony Albanese) ຜູ້ນຳອົດສະຕຣາລີ ໄດ້ໃຫ້ຄຳໝັ້ນສັນຍາວ່າຈະດຳເນີນການຢ່າງເດັດຂາດໃນການເສີມສ້າງກົດໝາຍການຄວບຄຸມອາວຸດປືນ ຫຼັງຈາກມີຜູ້ເສຍຊີວິດ 15 ຄົນຈາກການຖືກຍິງໃນເຫດການກໍ່ການຮ້າຍທີ່ງານບຸນຊາວຢິວ ທີ່ຫາດບອນໄດ ເມື່ອວັນທີ 14 ທັນວາຜ່ານມາ. ເຈົ້າໜ້າທີ່ກ່າວຫຼັງຈາກການໂຈມຕີວ່າ ໜຶ່ງໃນສອງມືປືນ ມີໃບອະນຸຍາດອາວຸດປືນ ແລະ ມີປືນຫົກກະບອກຢ່າງຖືກກົດໝາຍ.

ກົດໝາຍອາຊະຍາກຳຈາກຄວາມຊັງ ຈະໃຫ້ອຳນາດໃນການກຳນົດໃຫ້ອົງການເປັນ "ກຸ່ມທີ່ສະແດງຄວາມຊັງ", ອະນຸຍາດໃຫ້ລັດຖະມົນຕີຍົກເລີກຫຼື ປະຕິເສດວີຊາ ສຳລັບບຸກຄົນທີ່ເຜີຍແຜ່ຄວາມຄິດທີ່ສະແດງຄວາມຊັງ ຫຼື ຫົວຮຸນແຮງ ແລະ ສ້າງຄວາມຜິດທີ່ຮ້າຍແຮງຂຶ້ນສຳລັບການສະໜັບສະໜູນຄວາມຮຸນແຮງ ຫຼື ການເທດສະໜາຄວາມຊັງໃຫ້ແກ່ເດັກນ້ອຍ.

# Bulgaria ຈະຈັດການເລືອກຕັ້ງກ່ອນກຳນົດ ຫຼັງຈາກຄວາມພະຍາຍາມສ້າງຕັ້ງລັດຖະບານໃໝ່ລົ້ມເຫຼວ



(Xinhua) - ບຸນກາລີ ຈະຈັດການເລືອກຕັ້ງສະພາແຫ່ງຊາດ ຫຼັງຈາກຄວາມພະຍາຍາມຄັ້ງທີສາມ ແລະ ຄັ້ງສຸດທ້າຍ ໃນການສ້າງຕັ້ງລັດຖະບານໃໝ່ພາຍໃນສະພານິຕິບັນຍັດຊຸດປັດຈຸບັນລົ້ມເຫຼວເມື່ອວັນສຸກທີ 16 ມັງກອນຜ່ານມາ.

ປະທານາທິບໍດີ ຣູເມນ ຣາເດຟ (Rumen Radev) ສະເໜີໃຫ້ກຸ່ມສະພາແຫ່ງຊາດ "ພັນທະມິດເພື່ອສິດ ແລະ ເສລີພາບ" (Alliance for Rights and Freedoms-ARF) ສ້າງຕັ້ງລັດຖະບານເມື່ອວັນສຸກ, ແຕ່ກຸ່ມດັ່ງກ່າວ ປະຕິເສດຄຳຂໍຮ້ອງເປັນຄັ້ງທີສາມໃນອາທິດນີ້; ສອງກຸ່ມສະພາແຫ່ງຊາດທີ່ໃຫຍ່ທີ່ສຸດຄື GERB-UDF ແລະ PP-DB ກໍປະຕິເສດເຊັ່ນກັນກ່ອນໜ້ານີ້ໃນຕົ້ນອາທິດນີ້.

ຄວາມຈຳເປັນທີ່ຈະສ້າງຕັ້ງຄະນະລັດຖະມົນຕີໃໝ່ ເກີດຂຶ້ນໃນເດືອນທັນວາ ຫຼັງຈາກການລາອອກຂອງລັດຖະບານປະສົມທີ່ນຳໂດຍນາຍົກລັດຖະມົນຕີ ໂຣເຊນ ເຊລຢາຊຄອຟ (Rosen Zhelyazkov) ທ່າມກາງການປະທ້ວງຂະໜາດໃຫຍ່ກ່ຽວກັບນະໂຍບາຍເສດຖະກິດຂອງພັກສຽງສ່ວນຫຼາຍທີ່ປົກຄອງ.

ອີງຕາມລັດຖະທຳມະນູນບຸນກາລີ, ຫຼັງຈາກຄວາມລົ້ມເຫຼວຄັ້ງທີສາມ, ຣາເດຟຈະຕ້ອງແຕ່ງຕັ້ງນາຍົກລັດຖະມົນຕີແລະລັດຖະບານຮັກສາການຫຼັງຈາກປຶກສາຫາລືກັບກຸ່ມສະມາຊິກສະພາ ແລະ ກຳນົດວັນເລືອກຕັ້ງໃໝ່ພາຍໃນສອງເດືອນ. ເຖິງແນວໃດກໍຕາມ, ຂະບວນການນີ້ບໍ່ແມ່ນເລື່ອງງ່າຍ ເນື່ອງຈາກການປັບປຸງລັດຖະທຳມະນູນໃນທ້າຍປີ 2023, ຣາເດຟສາມາດແຕ່ງຕັ້ງນາຍົກລັດຖະມົນຕີຮັກສາການຈາກຕຳແໜ່ງສະເພາະເທົ່ານັ້ນ ໄດ້ແກ່: ປະທານສະພາແຫ່ງຊາດ, ຜູ້ວ່າການ ຫຼື ຮອງຜູ້ວ່າການທະນາຄານແຫ່ງຊາດ, ປະທານຫຼືຮອງປະທານອົງການກວດສອບແຫ່ງລັດ, ຫຼືປະທານອົງການກວດກາແຫ່ງລັດຫຼືຕົວແທນຂອງເຂົາ; ແຕ່ບໍ່ມີໃຜຈາກຕຳແໜ່ງເຫຼົ່ານີ້ ມີໜ້າທີ່ຕ້ອງຮັບຜິດຊອບ.

ນອກຈາກນີ້, ຣາເດຟຕ້ອງແຕ່ງຕັ້ງຄະນະລັດຖະມົນຕີຮັກສາການຕາມທີ່ນາຍົກລັດຖະມົນຕີຮັກສາການສະເໜີຊື່, ເຖິງແມ່ນວ່າເຂົາຈະບໍ່ເຫັນດີກັບຂໍ້ສະເໜີດັ່ງກ່າວກໍຕາມ. ສະຖານະການທີ່ຄ້າຍຄືກັນນີ້ ເຄີຍເກີດຂຶ້ນກ່ອນການເລືອກຕັ້ງສະພາແຫ່ງຊາດຄັ້ງຫຼ້າສຸດ; ໃນເດືອນສິງຫາ 2024, ຣາເດຟ ໄດ້ແຕ່ງຕັ້ງ ໂກຣິດຊາ ກຣານຊາໂຣວາ-ໂຄຊາເຣວາ (Goritsa Grancharova-Kozhareva) ເປັນນາຍົກລັດຖະມົນຕີຮັກສາການ ໂດຍມອບໃຫ້ນາງສະເໜີລາຍຊື່ສະມາຊິກລັດຖະບານຮັກສາການ. ຢ່າງໃດກໍຕາມ, ຣາເດຟ ບໍ່ເຫັນດີກັບການເລືອກຂອງນາງສຳລັບຕຳແໜ່ງລັດຖະມົນຕີກະຊວງພາຍໃນ; ເມື່ອນາງປະຕິເສດທີ່ຈະສະເໜີຊື່ຜູ້ສະໝັກຄົນອື່ນ, ປະທານາທິບໍດີຈຶ່ງແຕ່ງຕັ້ງນາຍົກລັດຖະມົນຕີຮັກສາການຜູ້ໃໝ່.

ລັດຖະບານຂອງ ເຊລຢາສຄອຟ ເຂົ້າຮັບຕຳແໜ່ງເມື່ອວັນທີ 16 ມັງກອນ 2025, ຫຼັງຈາກການເລືອກຕັ້ງສຸກເສີນໃນເດືອນຕຸລາ 2024 ເຊິ່ງເປັນການເລືອກຕັ້ງສະພາແຫ່ງຊາດຄັ້ງທີເຈັດໃນບຸນກາລີໃນເວລາພຽງສາມປີເຄິ່ງ.

# ສະພາແຫ່ງຊາດ Venezuela ປັບປຸງກົດໝາຍໄຮໂດຄາກບອນ



(Xinhua)-ວັນພະຫັດທີ 22 ມັງກອນຜ່ານມາ, ສະພາແຫ່ງຊາດເວເນຊູເອລາ ໄດ້ອະນຸມັດໃນວາລະທຳອິດກ່ຽວກັບການປະຕິຮູບບາງສ່ວນຂອງກົດໝາຍໄຮໂດຄາກບອນອິນຊີ (Organic Hydrocarbons) ເພື່ອປັບປຸງຂະແໜງພະລັງງານຂອງຕົນໃຫ້ທັນສະໄໝຂຶ້ນ.

ອໍແລນໂດ ຄາມາໂຊ (Orlando Camacho) ສະມາຊິກສະພາແຫ່ງຊາດຈາກຂະບວນການເຄື່ອນໄຫວ Somos Venezuela ທີ່ເປັນພັກສະໜັບສະໜູນລັດຖະບານ ເປັນຜູ້ສະເໜີຮ່າງກົດໝາຍດັ່ງກ່າວໃນລະຫວ່າງກອງປະຊຸມສະໄໝສາມັນ ໂດຍອະທິບາຍວ່າເປັນ "ບາດກ້າວສຳຄັນໃນການປັບປຸງຂະແໜງພະລັງງານໃຫ້ທັນສະໄໝ", ໃນຂະນະດຽວກັນ ກໍຮັບປະກັນວ່ານ້ຳມັນຍັງຄົງເປັນແຮງຂັບເຄື່ອນຕົ້ນຕໍຂອງການພັດທະນາປະເທດ.

ຮ່າງກົດໝາຍນີ້ ເຊິ່ງສະເໜີໂດຍນາງເດລຊີ ໂຣດຣິເກຊ (Delcy Rodriguez) ປະທານາທິບໍດີຮັກສາການ ໃນລະຫວ່າງການກ່າວສູນທອນພົດປະຈຳປີຕໍ່ປະຊາຊົນ ເມື່ອວັນທີ 15 ມັງກອນ 2026, ໄດ້ປັບປຸງຫຼືເພີ່ມຕື່ມ 18 ມາດຕາ 18 ແລະ ສຸມໃສ່ສາມບັນຫາຕົ້ນຕໍ.

ຄາມາໂຊ ກ່າວຕື່ມວ່າ ການປະຕິຮູບດັ່ງກ່າວ ມີຈຸດປະສົງເພື່ອປັບໂຄງສ້າງກົດໝາຍໃຫ້ເຂົ້າກັບການປ່ຽນແປງໃນຕະຫຼາດພະລັງງານໂລກ ແລະ ສົ່ງເສີມການພັດທະນາຮ່ວມກັນລະຫວ່າງພາກລັດ ແລະ ເອກະຊົນ.

ເບີນາເບ ກູເຕຍເຣຊ (Bernabe Gutierrez) ສະມາຊິກສະພາແຫ່ງຊາດຝ່າຍຄ້ານຈາກພັກການເຄື່ອນໄຫວປະຊາທິປະໄຕ ຍິນດີຕ້ອນຮັບຂໍ້ສະເໜີນີ້ ໂດຍກ່າວວ່າເຖິງເວລາແລ້ວທີ່ຈະຕ້ອງປັບປຸງກົດໝາຍໄຮໂດຄາກບອນ ຫຼັງຈາກບັງຄັບໃຊ້ມາສອງທົດສະວັດ.

ໃນວັນທີ 29 ມັງກອນ, ສະພາແຫ່ງຊາດ ໄດ້ຜ່ານຮ່າງກົດໝາຍດັ່ງກ່າວ.

"ການອະນຸມັດເປັນເອກະສັນ; ດັ່ງນັ້ນ, ກົດໝາຍໄຮໂດຄາກບອນອິນຊີ ຈຶ່ງມີຜົນບັງຄັບໃຊ້ເພື່ອເປັນປະຫວັດສາດ, ເພື່ອອະນາຄົດ, ເພື່ອລູກຫຼານຂອງພວກເຮົາ" ປະທານສະພາແຫ່ງຊາດ ຮໍເກ ໂຣດຣິເກສ (Jorge Rodriguez) ປະກາດ.

ປະທານສະພາກ່າວວ່າ ຮ່າງກົດໝາຍນີ້ ໄດ້ຮັບການອະນຸມັດຫຼັງຈາກຂະບວນການອະພິປາຍຢ່າງກວ້າງຂວາງ ເຊິ່ງລວມທັງຂໍ້ສະເໜີຫຼາຍກວ່າ 120 ຂໍ້ ທີ່ສົ່ງມາຈາກທົ່ວປະເທດ ແລະ ໄດ້ກ່າວຍ້ອງຍໍສະມາຊິກສະພາທັງລັດຖະບານ ແລະ ຝ່າຍຄ້ານ ສຳລັບການປະກອບສ່ວນຂອງພວກເຂົາ.

ກົດໝາຍສະບັບນີ້ຄວບຄຸມການສຳຫຼວດ, ການສະກັດ (ກັ່ນ), ການຂົນສົ່ງ, ແລະ ການນຳໃຊ້ໄຮໂດຄາກບອນ ລວມທັງກິດຈະກຳອື່ນໆ ໂດຍຢຶດໝັ້ນໃນຫຼັກການຂອງອະທິປະໄຕດ້ານພະລັງງານ, ການເປັນເຈົ້າຂອງແຫຼ່ງສຳຮອງໄຮໂດຄາກບອນຂອງລັດ ແລະ ການປົກປ້ອງສິ່ງແວດລ້ອມ.

ການປະຕິຮູບດັ່ງກ່າວ ໂດຍມີຈຸດປະສົງເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ກັບອຸດສາຫະກຳນ້ຳມັນຂອງປະເທດຜ່ານຮູບແບບການມີສ່ວນຮ່ວມໃໝ່ໆ ໂດຍອະນຸຍາດໃຫ້ດຳເນີນກິດຈະກຳທີ່ສຳຄັນພາຍໃຕ້ການຄວບຄຸມຂອງລັດ, ໃນຂະນະທີ່ຍັງຮັກສາການເປັນເຈົ້າຂອງສ່ວນໃຫຍ່ຂອງລັດໄວ້ດ້ວຍການເຂົ້າຮ່ວມຈາກທັງບໍລິສັດຂອງລັດ ແລະ ເອກະຊົນ.

ມາດຕາ 8 ຂອງກົດໝາຍທີ່ປັບປຸງໃໝ່ນີ້ ໄດ້ນຳສະເໜີກົນໄກການແກ້ໄຂຂໍ້ຂັດແຍ້ງທີ່ທັນສະໄໝມາໃຊ້ ລວມທັງການຕັດສິນຊີ້ຂາດ ໂດຍມີເປົ້າໝາຍເພື່ອດຶງດູດການລົງທຶນ, ກົດໝາຍດັ່ງກ່າວ ຍັງກຳນົດຄ່າທຳນຽມການສຳປະທານ ສູງສຸດເຖິງ 30% ແລະ ກຳນົດພາສີໄຮໂດຄາກບອນປະສົມປະສານໃນອັດຕາສູງສຸດເຖິງ 15% ຂອງລາຍຮັບລວມ.

ເວເນຊູເອລາ ມີນ້ຳມັນດິບໜັກທີ່ມີກຳມະຖັນສູງ ປະມານ 300 ຕື້ຖັງ ຫຼື ບາເຣວ (barrel ເທົ່າກັບ 160 ລິດ) ເຊິ່ງກວມເອົາປະມານໜຶ່ງສ່ວນຫ້າຂອງນ້ຳມັນສຳຮອງທົ່ວໂລກ. ເມື່ອວັນທີ 3 ມັງກອນ, ສະຫະລັດອາເມລິກາ ໄດ້ເປີດການບຸກໂຈມຕີເວເນຊູເອລາຢ່າງກະທັນຫັນ ແລະ ຈັບກຸມປະທານາທິບໍດີ ນິໂຄລາສ ມາດູໂຣ (Nicolas Maduro) ແລະ ພັນລະຍາ.

## ເຫັນໄວ້ ໄດ້ທິດທາງ

# ກຳປູເຈຍ ຊູກິດ ດ້ວຍຄວາມເປັນມິດ

❖ ວິເສດ ສະແຫວງສຶກສາ

ມີຂ່າວໜ້າສົນໃຈ ແຕ່ອາດມີຜູ້ແນມ ກາຍ ຈຶ່ງຂໍເອົາມາເວົ້າໃໝ່ໃຫ້ຫຼາຍຄົນໄດ້ຊາບ, ຂ່າວດັ່ງກ່າວບອກວ່າ ກຳປູເຈຍ ປະເທດອ້າຍ-ນ້ອງບ້ານໃກ້ເຮືອນຄຽງຂອງພວກເຮົາ ໄດ້ຮັບຄະແນນອັນດັບທີ 5 ຂອງໂລກ ໃນຖານະເປັນປະເທດທີ່ເປັນມິດທີ່ສຸດ; ໜ່ວຍງານທີ່ເຮັດການສຳຫຼວດ ແລະ ໃຫ້ຄະແນນ "ຄວາມເປັນມິດ" ນັ້ນ ໄດ້ແກ່ວາລະສານ Conde Nast Traveler 2025 ທີ່ມີຊື່ສຽງໃນອັງກິດ ໃນການສະໜອງຂໍ້ມູນກ່ຽວກັບແຫຼ່ງທ່ອງທ່ຽວໃນທົ່ວໂລກ. ບັນດາປະເທດທີ່ໄດ້ຮັບຄະແນນສູງໆ ໃນການຕີລາຄາມາດຕະຖານຄວາມເປັນມິດເທື່ອນີ້ ໄດ້ແກ່: ທີ 1 ແມ່ນປະເທດ ເຄນຢາ (ທີ່ອາຟຣິກາ) ໄດ້ຄະແນນ 98.46/100, ທີ 2 ແມ່ນປະເທດ ບາກບາໂດດ (ເຂດທະເລແຄຣິບຽນ) ໄດ້ຄະແນນ 98.18, ທີ 3 ຕົກເປັນຂອງປະເທດ ເມັກຊິກ ຫຼື ເມັກຊິໂກ ໄດ້ຄະແນນ 98.00, ສ່ວນທີ 4 ຂ່າວບໍ່ໄດ້ບອກວ່າເປັນປະເທດໃດ, ກຳປູເຈຍ ໄດ້ຄະແນນເປັນທີ 5 ຄື 97.33 ແຕ້ມ, ປະເທດໄທ ແລະ ຫວຽດນາມ ເປັນທີ 6 ແລະ ທີ 8 ຕາມລຳດັບ.

ເຫດຜົນທີ່ກຳປູເຈຍ ໄດ້ຄະແນນເປັນທີ 5 ໃນຖານະປະເທດທີ່ເປັນມິດທີ່ສຸດໃນໂລກນັ້ນ ຍ້ອນວ່າຊາວກຳປູເຈຍສ່ວນໃຫຍ່ນັບຖືສາສະໜາພຸດນິກາຍເຖລະວາດ ທີ່ສອນໃຫ້ຄົນມີຈິດໃຈເມດຕາສົງສານ, ມີຄວາມຮັກໃນເພື່ອນມະນຸດດ້ວຍກັນ ໂດຍບໍ່ມີການຈຳແນກ, ຊາວກຳປູເຈຍຕ້ອນຮັບແຂກບ້ານເມືອງດ້ວຍຄວາມເມດຕາປານີ ແລະ ອົບອຸ່ນ, ບໍ່ຂີ້ຖີ່ຮອຍຍິ້ມ; ກຳປູເຈຍ ມີອັງກໍວັດທີ່ບັນລືໂລກ, ນະຄອນຫຼວງພະນົມເປັນ ກໍມີຊີວິດຊີວາ, ສັງຄົມຂອງກຳປູເຈຍມີຄວາມກົມກຽວລະຫວ່າງຕົວເມືອງ ແລະ ຊົນນະບົດ, ພິເສດ ມີລະບົບການທ່ອງທ່ຽວແບບໃຫ້ແຂກພັກເຊົານຳເຮືອນປະຊາຊົນຂັ້ນຮາກຖານ ເອີ້ນວ່າ: ໂຮມສະເຕ (Home Stay) ບ່ອນທີ່ແຂກມີໂອກາດໄດ້ຊື່ນຊົມກັບຄວາມງາມຂອງຜ້າໄໝ ແລະ ທ້ອງທົ່ງນາ. ການຕີລາຄາຂອງວາລະສານທ່ອງທ່ຽວຊື່ດັ່ງນີ້ ຄົງຈະກາຍເປັນແມ່ເຫຼັກດຶງດູດນັກທ່ອງທ່ຽວເຂົ້າໄປກຳປູເຈຍຫຼາຍຂຶ້ນ.

ບົດຮຽນກຳປູເຈຍ ອາດຊ່ວຍໃຫ້ບ້ານເຮົາມີວິທີສ້າງພາບພົດທີ່ດີໆ ເພື່ອແຍ່ງຊີງຕະຫຼາດທາງສຽງທີ່ດີ ແນໃສ່ດຶງດູດນັກທ່ອງທ່ຽວ, ນັກລົງທຶນ ກໍຄືນັກວິຊາການລະດັບຫົວກະທິຈາກຕ່າງປະເທດ ເຂົ້າມາຊ່ວຍແຮງພັດທະນາເສດຖະກິດ-ສັງຄົມ ເພີ່ມລາຍຮັບໃຫ້ປະເທດຂອງເຮົາ; ຜ່ານມາ ຫຼາຍໆໜ່ວຍງານຕ່າງປະເທດເຄີຍໄດ້ໃຫ້ຄະແນນຄວາມໂດດເດັ່ນຫຼາຍດ້ານກ່ຽວກັບສະຖານທີ່ທ່ອງທ່ຽວບ້ານເຮົາເຊັ່ນວ່າ: ມີທຳມະຊາດສວຍສົດງົດງາມ, ມີວັດທະນະທຳທີ່ສືບສານເປັນຕຳນານ, ມີປະຫວັດສາດໜ້າຮຽນຮູ້, ມີຄວາມສະຫງົບສຸກ ແລະ ປອດໄພ. ເທື່ອໜ້າ ຖ້າພວກເຮົາໄດ້ຄະແນນສູງໆກ່ຽວກັບສະພາບການຄົມມະນາຄົມ, ການສື່ສານ, ຄວາມໂປ່ງໃສໄຮ້ມົນທິນຈາກການສໍ້ລາດບັງຫຼວງ, ຄວາມສະດວກສະບາຍດ້ານການເຂົ້າ-ອອກເມືອງ, ລາຄາອາຫານຖືກແລະອື່ນໆ ແຂກຕ່າງດ້າວທ້າວຕ່າງແດນ ກໍແຮງຈະປອດຢາກມາທ່ຽວລາວພວກເຮົາຕື່ມ.




**#ບ່າວກະບື**

**ຫຼັງ**ຈາກກວດເຊັກນັກທຸລະກິດເປັນທີ່ຮຽບຮ້ອຍແລ້ວ, ທ່ານໝໍກໍເອີ່ຍຂຶ້ນວ່າ:

"ເຈົ້າສະສົມຄວາມຄຽດໄວ້ພາຍໃນຫຼາຍໂພດແລ້ວ, ລໍຈົ່ງພະຍາຍາມເຮັດໃຈໃຫ້ສະບາຍ, ຢ່າເອົາບັນຫາຫຍຸ້ງເຫຍີງໃຈຂຶ້ນຕຽງນອນ".

" ໂອຍ... ແບບນັ້ນມັນເປັນໄປບໍ່ໄດ້ດອກທ່ານໝໍ, ເມຍເຮົາມັນບໍ່ຍອມແຍກຕຽງນອນດອກ" ນັກທຸລະກິດວ່າ.

**#BAOKBU**

The doctor, after examining the businessman said:

"You are building up too much tension within you. Try to relax. Don't take your troubles to bed with you"

"Oh! that's impossible doctor," said the businessman. "My wife will not agree to sleep on separate beds."

ທະນາຄານພັດທະນາລາວ
LDB Bank



## ສສຊ-ສສຂ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 15-16 ມັງກອນຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11 ນຳໂດຍ ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງປາກຊັນ ນຳໂດຍ ທ່ານ ນາງ ຄຳເພັດ ດວງມະນີ ປະທານຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງປາກຊັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະ, ຢ້ຽມຢາມຖາມຂ່າວພໍ່ແມ່ປະຊາຊົນຢູ່ 3 ບ້ານຂອງເມືອງປາກຊັນ ຄື: ໂນນອຸດົມ, ທ່າບໍ ແລະສອງຄອນຕິດພັນກັບການໂຄສະນາເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ IV ເຊິ່ງມີເລຂາຄະນະບໍລິຫານງານພັກເມືອງ, ຕາງໜ້າຫ້ອງການຂັ້ນເມືອງ, ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນພາຍໃນ 3 ບ້ານ ໃຫ້ການຕ້ອນຮັບຢ່າງອົບອຸ່ນ.

ໃນການລົງເຄື່ອນໄຫວ, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບຈຸດພິເສດ, ທີ່ຕັ້ງ, ການນຳພາ-ຊີ້ນຳຂອງອົງການປົກຄອງ ແລະ ການພັດທະນາເສດຖະກິດ-ສັງຄົມ ໃນໄລຍະຜ່ານມາ ແລະ ຄຳສະເໜີຈາກນາຍບ້ານ ເຊິ່ງພົວພັນກັບຫຼາຍບັນຫາເພື່ອຂໍທິດຊີ້ນຳແລະຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂຊ່ວຍຕາມຄວາມເໝາະສົມ. ຈາກນັ້ນ ສສຊ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງສອງກອງປະຊຸມດັ່ງກ່າວ ໃນນັ້ນ, ມີບັນດາມະຕິ, ກົດໝາຍ ແລະ ເນື້ອໃນເອກະສານບົດລາຍງານຕ່າງໆທີ່ນຳເຂົ້າພິຈາລະນາແລະຮັບຮອງຢູ່ກອງປະຊຸມ; ພ້ອມນັ້ນ, ຍັງໄດ້ຮັບຟັງຄຳຄິດຄຳເຫັນ ແລະ ຂໍ້ສະເໜີຕ່າງໆ ຈາກອຳນາດການປົກຄອງ ແລະ ພໍ່ແມ່ປະຊາຊົນ 3 ບ້ານ ເຊິ່ງບາງຂໍ້ສະເໜີ ກໍໄດ້ອະທິບາຍຊີ້ແຈງກັບທີ່ແລະ ບາງຂໍ້ສະເໜີທີ່ຕິດພັນກັບຫຼາຍພາກສ່ວນ ຈະນຳເອົາໄປສະເໜີຕໍ່ອົງການປົກຄອງເມືອງ, ແຂວງແລະພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້ໃຫ້ໄດ້ຮັບການແກ້ໄຂໂດຍໄວ; ພ້ອມນັ້ນ, ຍັງໄດ້ຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງ ກໍຄືພົນລະເມືອງລາວທີ່ມີອາຍຸ 18 ປີຂຶ້ນໄປ ຈົ່ງພ້ອມພາກັນໄປໃຊ້ສິດຂອງຕົນ ເລືອກຕັ້ງເອົາ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ທີ່ຈະຈັດຂຶ້ນໃນວັນທີ 22 ກຸມພາ 2026.

**(ໂສລະຢ້າ)**

## ເຝິກອົບຮົມ...

(ຕໍ່ຈາກໜ້າ 7)

ໄດ້ເນັ້ນໜັກໃຫ້ບັນດາອະນຸກຳມະການຮັບຮ້ອນເຜີຍແຜ່ມະຕິວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ຂັ້ນແຂວງ; ເອົາໃຈໃສ່ນຳພາ-ຊີ້ນຳ ໃນການຂຶ້ນບັນຊີພົນລະເມືອງຜູ້ມີສິດໄປປ່ອນບັດເລືອກຕັ້ງ ຢູ່ພາຍໃນເມືອງຂອງຕົນໃຫ້ຖືກຕ້ອງ, ຊັດເຈນ; ກະກຽມຂຶ້ນແຜນງົບປະມານຮັບໃຊ້ບັ້ນເລືອກຕັ້ງເພື່ອສະເໜີຫາຄະນະກຳມະການເລືອກຕັ້ງຂັ້ນແຂວງ ບົນພື້ນຖານປະຢັດມັດທະຍັດແລະກະກຽມຄວາມພ້ອມຢູ່ບັນດາໜ່ວຍປ່ອນບັດເລືອກຕັ້ງຕ່າງໆ ພາຍໃນເມືອງ ທັງຮັບປະກັນຄວາມສະຫງົບປອດໄພ 100% ແລະ ເປັນເຈົ້າການແບບຢ່າງທີ່ດີ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ ໄປຕາມລະບຽບ ແລະ ກົດໝາຍກຳນົດໄວ້ຢ່າງເຂັ້ມງວດ.

**(ນາງ ອຳໄພພອນ ແກ້ວວິໄລ)**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພົນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລົມ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລົມ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ